# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຽງຂອງສະພາແຫ່ງຊາດ

ສຳນັກງານຕັ້ງຢູ່ອາລານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

17-24 ມີນາ 2026
ປີທີ 15
ສະບັບທີ 1058
ລາຍສັປະດາ


## ການນຳພັກ-ລັດ ວາງພວງມາລາ ແລະ ກະຕ່າ ດອກໄມ້ໂອກາດວັນສ້າງຕັ້ງພັກ ຄົບຮອບ 71 ປີ



(ສພຊ) - ວັນທີ 22 ມີນານີ້, ການນຳຂັ້ນສູງພັກ-ລັດ ນຳໂດຍສະຫາຍ ທອງລຸນ ສີສຸລິດ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ, ປະທານປະເທດ ໄດ້ເຂົ້າວາງພວງມາລາ ຢູ່ອະນຸສາວະລີນັກຮົບນິລະນາມ (ດາວແດງ) ແລະ ວາງກະຕ່າດອກໄມ້ຢູ່ຕໍ່ໜ້າຮູບປັ້ນຫຼໍ່ປະທານ ໄກສອນ ພົມວິຫານ ທີ່ຫໍພິພິທະພັນ ປະທານ ໄກສອນ ພົມວິຫານເນື່ອງໃນໂອກາດສະເຫຼີມສະຫຼອງວັນສ້າງຕັ້ງພັກປະ

ອ່ານຕໍ່ໜ້າ 11



### ແນວຄິດປະທານ ໄກສອນ ພົມວິຫານ ຜູ້ນຳທີ່ປະຊາຊົນເຄົາລົບຮັກ

ການປະຕິວັດຂອງປະເທດເຮົາໃນໄລຍະໃໝ່ນີ້ ແມ່ນໄລຍະແຫ່ງການປັບປຸງ, ຂະຫຍາຍ ແລະ ບູລະນະລະບອບປະຊາທິປະໄຕປະຊາຊົນ ຂ້າມຜ່ານຂຶ້ນສູ່ສັງຄົມນິຍົມເທື່ອລະກ້າວ.

(ນິພົນເລືອກເຟັ້ນ ເຫຼັ້ມ 3, ໜ້າ 321)

ລັກສະນະພື້ນຖານຂອງການປະຕິວັດປະເທດເຮົາໃນໄລຍະໃໝ່ ແມ່ນລັກສະນະປະຊາທິປະໄຕປະຊາຊົນ ກ້າວຂຶ້ນສັງຄົມນິຍົມເທື່ອລະກ້າວ, ຫາກບໍ່ແມ່ນຂະຫຍາຍຕົວໄປຢູ່ນອກວົງໂຄຈອນຂອງສັງຄົມນິຍົມແຕ່ຢ່າງໃດ. ອັນນີ້ເປັນບັນຫາທີ່ພວກເຮົາຈະຕ້ອງຮັບຮູ້ໃຫ້ຈະແຈ້ງ.

(ນິພົນເລືອກເຟັ້ນ ເຫຼັ້ມ 3, ໜ້າ 322)

ອ່ານຕໍ່ສະບັບໜ້າ

## ປະທານສະພາແຫ່ງຊາດ ເຂົ້າຢ້ຽມຂໍ່ານັບພະບາດສົມເດັດ ພຣະວະຊິຣະເກົ້າເຈົ້າຢູ່ຫົວ ແລະ ສົມເດັດພະນາງເຈົ້າ ພຣະບໍຣົມລາຊິນີແຫ່ງ ລາຊະອານາຈັກໄທ

(ສພຊ) - ວັນທີ 17 ມີນາຜ່ານມາ ທີ່ໂຮງແຮມຄຣາວພລາຊາ, ທ່ານປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດແຫ່ງສປປລາວພ້ອມດ້ວຍພັນລະຍາ ໄດ້ເຂົ້າຢ້ຽມຂໍ່ານັບພະບາດສົມເດັດ ພຣະວະຊິຣະເກົ້າເຈົ້າຢູ່ຫົວ ແລະ ສົມເດັດພະນາງເຈົ້າ ພຣະບໍຣົມລາຊິນີ ແຫ່ງ ລາ

ອ່ານຕໍ່ໜ້າ 3






## ຖອດຖອນບົດຮຽນການເລືອກຕັ້ງ ສສຊ ຊຸດທີ X ແລະ ສສຂ ຊຸດທີ V



(ສພຊ) - ວັນທີ 17 ມີນານີ້, ຄະນະກຳມະການເລືອກຕັ້ງລະດັບຊາດ (ຄລຊ) ໄດ້ຈັດກອງປະຊຸມສະຫຼຸບຖອດຖອນບົດຮຽນກ່ຽວກັບການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V ໂດຍການເປັນປະທານຂອງທ່ານ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ, ປະທານຄະນະກຳມະການເລືອກຕັ້ງລະດັບຊາດ; ມີບັນດາທ່ານຮອງປະທານແລະກຳມະການໃນຄລຊ, ປະທານ-ຮອງປະທານຄະນະກຳ

ອ່ານຕໍ່ໜ້າ 3

## ຄະນະມິດຕະພາບລັດຖະສະພາ ສ.ເກົາຫຼີ-ລາວ ຢ້ຽມຢາມ ແລະ ເຮັດວຽກຢູ່ ສປປລາວ



ອ່ານຕໍ່ໜ້າ 2

## ສະພາແຫ່ງຊາດ ຊຸດທີ X ຈະຮັບຮອງຫຼາຍບັນຫາສຳຄັນ



(ສພຊ) - ຕອນແລງວັນທີ 18 ມີນານີ້, ທ່ານ ນາງ ອຳໄພວອນ ລ້ອມບຸນແພງ ກຳມະການສູນກາງພັກ, ກຳມະການຄະນະປະຈຳສະພາແຫ່ງຊາດ, ຫົວໜ້າຫ້ອງວ່າການສະພາແຫ່ງຊາດ ໄດ້ຖະແຫຼງຂ່າວຕໍ່ສື່ມວນຊົນກ່ຽວກັບການດຳເນີນກອງປະ

ອ່ານຕໍ່ໜ້າ 3




ຄຸນປະໂຫຍດຂອງ... (ໜ້າ 8)



ສະພານິຕິບັນຍັດ... (ໜ້າ 9)

ເຂົ້າໃຈ ໄດ້ບົດຮຽນ
ວິເສດ ສະແຫວງສຶກສາ

ຂ່າວສັ້ນໆ ແຕ່ເຜັດມັນ... (ໜ້າ 12)


**ຊົມເຊີຍວັນສ້າງຕັ້ງພັກປະຊາຊົນປະຕິວັດລາວ ຄົບຮອບ 71 ປີ (22/3/1955-22/3/2026) ຢ່າງສຸດໃຈ!**

# ສຳເລັດການເຂົ້າຮ່ວມ ກອງປະຊຸມສຸດຍອດ NXT-2026




(ສພຊ) - ລະຫວ່າງວັນທີ 12-15 ມີນາ 2026 ຄະນະຜູ້ແທນສະພາແຫ່ງຊາດ ນຳໂດຍທ່ານ ຈັນທະວົງ ແສນອາມາດມົນຕີ ຮອງປະທານກຳມາທິການການຕ່າງປະເທດ ໄດ້ເຂົ້າຮ່ວມກອງປະຊຸມສຸດຍອດ NXT-2026 ທີ່ນະຄອນຫຼວງນິວເດລີ, ປະເທດອິນເດຍ ເຊິ່ງກອງປະຊຸມດັ່ງກ່າວ ຈັດຂຶ້ນພາຍໃຕ້ການເປັນເຈົ້າພາບ ແລະ ການສະໜັບສະໜູນທາງດ້ານງົບປະມານຂອງທ່ານ ກາຣຕິເກຢາ ຊຣາມາ ສະມາຊິກສະພາສູງອິນເດຍ ໂດຍມີບັນດາອະດີດນາຍົກລັດຖະມົນຕີ, ສະມາຊິກລັດຖະສະພາ, ນັກຊ່ຽວຊານ ແລະ ບັນດາອາຈານຂອງມະຫາວິທະຍາໄລຈາກທົ່ວໂລກ ເຂົ້າຮ່ວມ; ນອກນັ້ນ, ກໍຍັງມີບັນດານັກຮຽນ-ນັກສຶກສາຈາກມະຫາວິທະໄລຕ່າງໆ ເຂົ້າຮ່ວມຖອດຖອນບົດຮຽນຢ່າງຫຼວງຫຼາຍ.

ກອງປະຊຸມຄັ້ງນີ້, ທ່ານ ນາເລນດຣາ ໂມດີ ນາຍົກລັດຖະມົນຕີອິນເດຍ ໄດ້ໃຫ້ກຽດເຂົ້າຮ່ວມ ແລະ ກ່າວປາໄສ ໂດຍທ່ານເນັ້ນໜັກເຖິງວິໄສທັດຂອງອິນເດຍກ່ຽວກັບນະວັດຕະກຳ, ການຮ່ວມມືດ້ານເຕັກໂນໂລຊີ, ການເຕີບໂຕທາງດ້ານເສດຖະກິດ, ການຫັນເປັນດິຈິຕອນ, ການຕອບສະໜອງຕໍ່ວິກິດການຕ່າງໆ ແລະ ໂອກາດທີ່ເກີດຂຶ້ນໃໝ່ສຳລັບການຮ່ວມມືສາກົນ; ພ້ອມດຽວກັນ, ກໍຮຽກຮອງໃຫ້ບັນດານັກການເມືອງ, ສື່ມວນຊົນ, ຊາວໜຸ່ມ, ພາກສ່ວນທຸລະກິດ ແລະ ພົນລະ ເມືອງ ຍົກສູງການຮ່ວມມືກັນເພື່ອການພັດທະນາປະເທດຊາດ. ຫຼັງຈາກນັ້ນ, ບັນດາແຂກທີ່ເຂົ້າຮ່ວມ ແລະ ນັກຊ່ຽວຊານຈາກທົ່ວໂລກ ກໍໄດ້ຜັດປ່ຽນກັນຂຶ້ນກ່າວປາໄສ ແລະ ມີຄຳເຫັນສົນທະນາກ່ຽວກັບວຽກງານສຳຄັນຕ່າງໆ ເຊັ່ນ: ການສຶກສາ, ອຸດສາຫະກຳ, ຄວາມຍືນຍົງ, ການຄ້າ, ກົດໝາຍ, ການພົວພັນສາກົນ, ດິຈິຕອນ, ປັນຍາປະດິດ, ນະວັດຕະກຳການຮັກສາສຸຂະພາບ, ການເງິນ, ການທະນາຄານ, ການປ້ອງກັນປະເທດ, ຄວາມສະເໝີພາບ, ປັດຊະຍາ ແລະ ອື່ນໆ.

ໃນການກອງປະຊຸມສຳມະນາຄັ້ງນີ້, ທ່ານ ຈັນທະວົງ ແສນອາມາດມົນຕີ ໄດ້ຂຶ້ນກ່າວປາໄສພາຍໃຕ້ຫົວຂໍ້ "ການເຊື່ອມໂຍງດິຈິຕອນໃນອາຊຽນ ແລະ ພາກພື້ນອື່ນ" ເຊິ່ງທ່ານຍົກໃຫ້ເຫັນເຖິງການຈັດຕັ້ງປະຕິບັດແຜນແມ່ບົດດິຈິຕອນອາຊຽນ 2020, 2025 ແລະ 2030, ບົດບາດໃນການຊຸກຍູ້ວຽກງານດັ່ງກ່າວຂອງສະມັດຊາລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ (AIPA), ການຫັນເປັນດິຈິຕອນຂອງ ສປປລາວ ແລະ ທິດທາງຂອງວຽກງານດັ່ງກ່າວລະຫວ່າງອາຊຽນກັບພາກພື້ນອື່ນ; ນອກຈາກນັ້ນ, ຍັງໄດ້ຮ່ວມໃນເວທີແລກປ່ຽນສົນທະນາພາຍໃຕ້ຫົວຂໍ້ "ການພົວພັນພາກພື້ນຜ່ານທາງດ້ານວັດທະນະທຳ" ເຊິ່ງທ່ານຍົກໃຫ້ເຫັນເຖິງການດຳເນີນນະໂຍບາຍການຕ່າງປະເທດ ສັນຕິພາບ, ເອກະລາດ, ມິດຕະພາບ ແລະ ການຮ່ວມມືເພື່ອການພັດທະນາ ຂອງ ສປປ ລາວ, ຕີລາຄາສູງຕໍ່ການພົວພັນຮ່ວມມືລະຫວ່າງສປປລາວກັບສາທາລະນະລັດອິນເດຍ ພ້ອມທັງຍົກໃຫ້ເຫັນເຖິງການຮ່ວມມືແລະ ຄວາມສາມັກຄີພາຍໃນຄອບຄົວອາຊຽນ. ການປະກອບຄຳເຫັນຂອງຫົວໜ້າຄະນະຜູ້ແທນລາວ ຕ່າງກໍໄດ້ຮັບຄວາມສົນໃຈ ແລະ ມີການຕອບຮັບທີ່ດີຈາກຜູ້ເຂົ້າຮ່ວມກອງປະຊຸມຢ່າງຫຼວງຫຼາຍ.

ກອງປະຊຸມຄັ້ງນີ້ ເປັນການສະແດງເຖິງວິໄສທັດຂອງບັນດາຜູ້ນຳ ແລະ ນັກຊ່ຽວຊານທາງດ້ານຕ່າງໆຈາກທົ່ວໂລກ, ພ້ອມທັງເປັນການແລກປ່ຽນປະສົບການ ແລະ ບົດຮຽນເຊິ່ງກັນແລະກັນ ເພື່ອວາງແນວທາງພື້ນຖານ ແລະ ຂໍ້ລິເລີ່ມສຳລັບໂລກໃນອະນາຄົດ.






## ຄະນະ...

(ຕໍ່ຈາກໜ້າ 1)

(ສພຊ) - ວັນທີ 16 ມີນາຜ່ານມາ ທີ່ສະພາແຫ່ງຊາດ, ທ່ານ ສັນຍາ ປຣະເສີດ ຄະນະປະຈຳສະພາແຫ່ງຊາດ, ປະທານກຳມາທິການການຕ່າງປະເທດ ພ້ອມດ້ວຍຄະນະມິດຕະພາບລັດຖະສະພາ ລາວ-ສ.ເກົາຫຼີ ໄດ້ຕ້ອນຮັບທ່ານ ອອມ ແທຢອງ ປະທານຄະນະມິດຕະພາບລັດຖະສະພາ ສ.ເກົາຫຼີ-ລາວ ພ້ອມດ້ວຍຄະນະ ໃນໂອກາດມາຢ້ຽມຢາມ ແລະ ເຮັດວຽກຢູ່ ສປປ ລາວ; ການມາຢ້ຽມຢາມຄັ້ງນີ້ ມີຄວາມໝາຍສຳຄັນໃນການປະກອບສ່ວນເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມືທີ່ດີທີ່ມີມາແຕ່ດົນນານລະຫວ່າງສອງປະເທດ ເວົ້າລວມ, ເວົ້າສະເພາະ ລະຫວ່າງສອງອົງການນິຕິບັນຍັດ ກໍຄືຄະນະມິດຕະພາບລັດຖະສະພາ ລາວ-ສ.ເກົາຫຼີ, ສ.ເກົາຫຼີ-ລາວ ໃຫ້ນັບມື້ນັບໄດ້ຮັບການພັດທະນາໃຫ້ເປັນຮູບປະທຳຫຼາຍຂຶ້ນ.

ການພົບປະຄັ້ງນີ້, ທັງສອງຝ່າຍໄດ້ແຈ້ງສະພາບການທີ່ພົ້ນເດັ່ນໃນການພັດທະນາເສດຖະກິດ-ສັງຄົມ, ການເຄື່ອນໄຫວວຽກງານລັດຖະສະພາ ໃຫ້ກັນແລະກັນຊາບໂດຍສັງເຂບ ພ້ອມທັງປຶກສາຫາລືກ່ຽວກັບການສືບຕໍ່ພົວພັນຮ່ວມມືລະຫວ່າງຄະນະມິດຕະພາບລັດຖະສະພາ ລາວ-ສ.ເກົາຫຼີ, ສ.ເກົາຫຼີ-ລາວ ເພື່ອແລກປ່ຽນບົດຮຽນຕ່າງໆນຳກັນໃນຂົງເຂດນິຕິບັນຍັດ, ການຕິດຕາມຊຸກຍູ້ການຈັດຕັ້ງປະຕິບັດບັນດາສັນຍາ, ຂໍ້ຕົກລົງ ແລະ ໂຄງການ ທີ່ລັດຖະບານຂອງສອງປະເທດໄດ້ລົງນາມຮ່ວມກັນ ໃຫ້ເປັນຮູບປະທຳຍິ່ງຂຶ້ນ ເພື່ອຜົນປະໂຫຍດຂອງປະຊາຊົນສອງຊາດ ກໍຄືເພື່ອປົກປັກຮັກສາສັນຕິພາບ, ສະຖຽນລະພາບ, ການຮ່ວມມື ແລະ ການພັດທະນາແບບຍືນຍົງ ໃນພາກພື້ນ ແລະ ສາກົນ.

ໃນວັນດຽວກັນ, ປະທານຄະນະມິດຕະພາບລັດຖະສະພາ ສ.ເກົາຫຼີ-ລາວ ພ້ອມດ້ວຍຄະນະ ໄດ້ເຂົ້າຢ້ຽມຂໍ່ານັບທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ ເຊິ່ງທັງສອງຝ່າຍໄດ້ຕີລາຄາສູງຕໍ່ສາຍພົວພັນມິດຕະພາບ ແລະ ການຮ່ວມມືທີ່ດີງາມມາແຕ່ດົນນານລະຫວ່າງສອງປະເທດ ລາວ-ສ.ເກົາຫຼີ ທີ່ສືບຕໍ່ຂະຫຍາຍຕົວຢ່າງຕໍ່ເນື່ອງ ແລະ ເປັນຮູບປະທຳຫຼາຍຂຶ້ນ ເຊິ່ງສະແດງອອກໃນການແລກປ່ຽນການຢ້ຽມຢາມຂອງຄະນະຜູ້ແທນຂັ້ນສູງ ແລະ ຂັ້ນຕ່າງໆນຳກັນຢ່າງປົກກະຕິ, ການຮ່ວມມືເພື່ອເສີມຂະຫຍາຍການພົວພັນທາງດ້ານເສດຖະກິດ, ການຄ້າ, ການລົງທຶນ, ການສຶກສາ, ການພັດທະນາຊັບພະຍາກອນມະນຸດ, ສາທາລະນະສຸກ, ການທ່ອງທ່ຽວແລະອື່ນໆ; ພ້ອມກັນນັ້ນ, ສອງຝ່າຍກໍເຫັນດີສືບຕໍ່ໃຫ້ມີການພົວພັນຮ່ວມມືນຳກັນໃນດ້ານຕ່າງໆ ທີ່ສອງປະເທດມີທ່າແຮງຮ່ວມກັນເພື່ອນຳເອົາຜົນປະໂຫຍດມາສູ່ຂອງປະຊາຊົນສອງຊາດ.

ການມາຢ້ຽມຢາມຄັ້ງນີ້, ຄະນະຜູ້ແທນສະພາແຫ່ງຊາດ ສ.ເກົາຫຼີ ໄດ້ຢ້ຽມຢາມ ແລະ ເຮັດວຽກຢູ່ວິທະຍາໄລເຕັກນິກ-ວິຊາຊີບ ທີ່ແຂວງຫຼວງພະບາງ, ຢ້ຽມຊົມສູນອົງຄະທຽມ (COPE) ທີ່ນະຄອນຫຼວງວຽງຈັນ ທີ່ເປັນໂຄງການຊ່ວຍເຫຼືອເພື່ອການພັດທະນາ (ODA); ນອກນັ້ນ, ຍັງໄດ້ຢ້ຽມຊົມສະຖານທີ່ທ່ອງທ່ຽວທາງວັດທະນະທຳ ແລະ ທຳມະຊາດ ຈຳນວນໜຶ່ງ ຢູ່ແຂວງຫຼວງພະບາງ ແລະ ນະຄອນຫຼວງວຽງຈັນ ກ່ອນເດີນທາງກັບຄືນປະເທດ.

# ມອບ-ຮັບນໍ້າດື່ມ ປະກອບສ່ວນ ເຂົ້າໃນກອງປະຊຸມຄັ້ງປະຖົມມະລຶກ



(ສພຊ) - ວັນທີ 20 ມີນານີ້ ທີ່ສະພາແຫ່ງຊາດ ໄດ້ມີພິທີມອບ-ຮັບນໍ້າດື່ມ ຈາກໂຮງງານນໍ້າດື່ມ ມີນີໂຣ ແລະ ນໍ້າໝາກໄມ້ ຈຳກັດ (ກຸ່ມບໍລິສັດ DSK ຈຳກັດ) ມູນຄ່າເກືອບ 115 ລ້ານກີບ ເພື່ອປະກອບສ່ວນເຂົ້າໃນກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ X; ຕາງໜ້າກ່າວມອບໂດຍນາງ ພອນສະຫວັນ ແສນບຸດຕະລາດ ຜູ້ຊ່ວຍປະທານບໍລິສັດ ດີເອັສເຄ ຈຳກັດ ແລະ ຕາງໜ້າກ່າວຮັບໂດຍທ່ານ ພົງສະຫວັນ ແກ້ວລະຄອນ ຫົວໜ້າກົມບໍລິຫານ-ພິທີການ ໂດຍມີພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມເປັນສັກຂີພະຍານ.

ທ່ານ ພົງສະຫວັນ ແກ້ວລະຄອນ ໄດ້ສະແດງຄວາມຂອບໃຈຕໍ່ການສະໜັບສະໜູນຄັ້ງນີ້; ພ້ອມນັ້ນ, ຍັງໄດ້ຕາງໜ້າໃຫ້ຫ້ອງວ່າການສະພາແຫ່ງຊາດ ມອບໃບຍ້ອງຍໍຂອງຄະນະປະຈຳສະພາແຫ່ງຊາດ ເພື່ອເປັນການຍ້ອງຍໍຜົນງານດີເດັ່ນໃນການປະກອບສ່ວນຊຸກຍູ້ ແລະ ອຸປະຖຳໃນຄັ້ງນີ້.



## ຖອດຖອນ...

(ຕໍ່ຈາກໜ້າ 1)

ມະການເລືອກຕັ້ງນະຄອນຫຼວງ-ແຂວງ, ຮອງເລຂາຄະນະພັກກະຊວງ-ອົງການອ້ອມຂ້າງສູນກາງ ແລະ ແຂກເຖິກເຊີນ ເຂົ້າຮ່ວມຢ່າງພ້ອມພຽງ.

ທັງນີ້, ກໍເພື່ອຈັດຕັ້ງຜັນຂະຫຍາຍມະຕິກົມການເມືອງສູນກາງພັກ ກ່ຽວກັບການເພີ່ມທະວີການນຳພາ-ຊີ້ນຳຂອງອົງຄະນະພັກທຸກຂັ້ນຕໍ່ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V ສະບັບເລກທີ 26/ກມສພ, ລົງວັນທີ 12 ກັນຍາ 2025 ທັງເປັນການສະຫຼຸບຕີລາຄາ, ຖອດຖອນບົດຮຽນ ແລະ ແລກປ່ຽນບົດຮຽນເຊິ່ງກັນແລະກັນ ກ່ຽວກັບຜົນສຳເລັດການເລືອກຕັ້ງຄັ້ງນີ້.

ກອງປະຊຸມໄດ້ຮັບຟັງການລາຍງານກ່ຽວກັບຜົນສຳເລັດຂອງການດຳເນີນການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V ຈາກທ່ານ ປອ. ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງປະທານສະພາແຫ່ງຊາດ, ຜູ້ປະຈຳການຄະນະກຳມະການເລືອກຕັ້ງລະດັບຊາດ ເຊິ່ງທ່ານໃຫ້ຮູ້ວ່າ: ການປ່ອນບັດເລືອກຕັ້ງໃນວັນທີ 22 ກຸມພາ 2026 ມີຜູ້ໄປໃຊ້ສິດ 4,620,353 ຄົນ ເທົ່າກັບ96.97%ຂອງຜູ້ມີສິດເລືອກຕັ້ງທັງໝົດ ໃນນີ້, ມີຜູ້ໃຊ້ສິດຢູ່ຕ່າງປະເທດ 23,378 ທ່ານ ຍິງ 7,782 ທ່ານ. ສຳລັບຜົນຂອງການເລືອກຕັ້ງ: ເລືອກຕັ້ງໄດ້ສະມາຊິກສະພາແຫ່ງຊາດ (ສສຊ) 175 ທ່ານ ຍິງ 52 ທ່ານ ກວມເອົາ 29.71%, ຈາກສູນກາງ 51 ທ່ານ ຍິງ 14 ທ່ານ, ຈາກທ້ອງຖິ່ນ 124 ທ່ານ ຍິງ 38 ທ່ານ, ສສຊ ຊຸດທີ IX ສືບຕໍ່ສະໝັກໄດ້ 32 ທ່ານ ຍິງ 14 ທ່ານ, ຈາກລັດວິສາຫະກິດ ຍິງ 1 ທ່ານແລະ ຈາກທຸລະກິດພາກເອກະຊົນ 2 ທ່ານ ຍິງ 1 ທ່ານ; ເລືອກຕັ້ງໄດ້ສະມາຊິກສະພາປະຊາຊົນຂັ້ນແຂວງ (ສສຂ) 745 ທ່ານ ຍິງ 211 ທ່ານ ກວມເອົາ 28.32%, ສັງກັດຢູ່ບັນດາພະແນກການຕ່າງໆທົ່ວປະເທດ 229 ທ່ານ ຍິງ 61 ທ່ານ, ສັງກັດຢູ່ຂັ້ນເມືອງທົ່ວປະເທດ 496 ທ່ານ ຍິງ 144 ທ່ານ, ຈາກລັດວິສາຫະກິດ 7 ທ່ານ ແລະ ຈາກທຸລະກິດພາກເອກະຊົນ 13 ທ່ານ ຍິງ 6 ທ່ານ ເຊິ່ງຜົນສຳເລັດໃນການນັບຄະແນນໄດ້ຕາມເວລາກຳນົດ ແມ່ນຍ້ອນມີການນຳໃຊ້ລະບົບເຕັກນິກໃໝ່ໃນການນັບຄະແນນ E-Vote ແລະ ມີການເຝິກອົບຮົມເຊິ່ງໜ້າ ແລະ ອອນລາຍ. ສັງລວມໄດ້ວ່າຜ່ານບັ້ນເລືອກຕັ້ງໃນຄັ້ງນີ້ ສາມາດບັນລຸຕາມຈຸດປະສົງຄາດໝາຍທີ່ວາງໄວ້, ໃນນີ້ມີຫຼາຍເຂດເລືອກຕັ້ງສາມາດບັນລຸໄດ້ຄາດໝາຍ 4 ດ້ານຄື: ມີຜູ້ໄປໃຊ້ສິດເລືອກຕັ້ງ 100%, ບໍ່ມີບັດຕາຍ 100%, ການປ່ອນບັດມີຄວາມໂປ່ງໃສ100%ແລະຮັບປະກັນຄວາມສະຫງົບປອດໄພ 100%.

ຈາກນັ້ນ, ໄດ້ຮັບຟັງການປະກອບຄຳເຫັນຂອງບັນດາອະນຸກຳມະການຂອງຄະນະກຳມະການເລືອກຕັ້ງລະດັບຊາດ ແລະ ຄະນະກຳມະການເລືອກຕັ້ງຂັ້ນແຂວງ 8 ແຂວງຄື: ນະຄອນຫຼວງວຽງຈັນ, ແຂວງຜົ້ງສາລີ, ແຂວງໄຊຍະບູລີ, ແຂວງຫົວພັນ, ແຂວງສະຫວັນນະເຂດ, ແຂວງຈຳປາສັກ, ແຂວງເຊກອງ ແລະ ແຂວງໄຊສົມບູນ ເພື່ອຊອກໃຫ້ເຫັນດ້ານດີ, ຂໍ້ຄົງຄ້າງ ກໍຄືບັນດາສາເຫດທີ່ພາໃຫ້ມີດ້ານດີ, ຂໍ້ຄົງຄ້າງ ແລະ ບົດຮຽນທີ່ຖອດຖອນໄດ້ ພ້ອມທັງສະເໜີມາດຕະການ ແລະ ວິທີການແກ້ໄຂ ເພື່ອເປັນພື້ນຖານໃຫ້ແກ່ການປັບປຸງວຽກງານເລືອກຕັ້ງຄັ້ງຕໍ່ໄປ.

**(ນາງ ອາລິນ ສຸພົມມະປະດິດ)**

# ແຈ້ງການ
## ຂອງຫ້ອງວ່າການສະພາແຫ່ງຊາດ

**ອີງຕາມມາດຕາ 54 ຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ສະບັບປັບປຸງປີ 2024 ແລະ ອີງຕາມມະຕິຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 30/ຄປຈ, ລົງວັນທີ 13 ມີນາ 2026 ວ່າດ້ວຍການດຳເນີນກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ X.**

**ຫ້ອງວ່າການສະພາແຫ່ງຊາດ ມີຄວາມຍິນດີ ແລະ ຂໍຖືເປັນກຽດແຈ້ງມາຍັງພະນັກງານ–ລັດຖະກອນ, ທະຫານ–ຕຳຫຼວດ, ນັກຮຽນ–ນັກສຶກສາ, ປັນຍາຊົນ, ກຳມະກອນ, ຊາວຜູ້ອອກແຮງງານ, ພໍ່ແມ່ພີ່ນ້ອງປະຊາຊົນລາວບັນດາເຜົ່າໃນທົ່ວປະເທດ, ພີ່ນ້ອງຊາວລາວທີ່ອາໄສຢູ່ຕ່າງປະເທດ ແລະ ບັນດາທູຕານຸທູດ, ອົງການຈັດຕັ້ງສາກົນປະຈຳຢູ່ ສປປ ລາວ ຊາບວ່າ: ກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ X ຈະຈັດຂຶ້ນຢ່າງເປັນທາງການ ລະຫວ່າງວັນທີ 23–27 ມີນາ 2026 ຢູ່ທີ່ສະພາແຫ່ງຊາດ, ນະຄອນຫຼວງວຽງຈັນ.**

**ດັ່ງນັ້ນ, ຫ້ອງວ່າການສະພາແຫ່ງຊາດ ຈຶ່ງຂໍແຈ້ງມາເພື່ອຊາບດ້ວຍ.**

ຜູ້ແທນປະຊາຊົນ PHOUTHEN PASAXON

## ສະພາ...

(ຕໍ່ຈາກໜ້າ 1)

ຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ X ເຊິ່ງທ່ານໃຫ້ຮູ້ວ່າ: ກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີX ຈະໄຂຂຶ້ນໃນລະຫວ່າງວັນທີ 23-27 ມີນາ 2026 ໃຊ້ເວລາລວມທັງໝົດ 5 ວັນ ຢູ່ທີ່ຫ້ອງປະຊຸມຂອງສະພາແຫ່ງຊາດ, ນະຄອນຫຼວງວຽງຈັນ ເຊິ່ງກອງປະຊຸມຄັ້ງນີ້ແມ່ນມີຄວາມໝາຍຄວາມສຳຄັນຍິ່ງເພາະເປັນກອງປະຊຸມຄັ້ງທຳອິດແລະເປັນການເລີ່ມຕົ້ນການເຄື່ອນໄຫວປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງສະພາແຫ່ງຊາດຊຸດທີ X ຢ່າງເປັນທາງການ ໂດຍຈະພິຈາລະນາ, ຮັບຮອງບັນຫາສຳຄັນພື້ນຖານຂອງປະເທດຊາດຕາມທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ ແລະ ກົດໝາຍ ເຊິ່ງລະອຽດມີດັ່ງນີ້:

1. ຮັບຟັງລາຍງານຂອງຄະນະກຳມະການເລືອກຕັ້ງລະດັບຊາດກ່ຽວກັບຜົນຂອງການເລືອກຕັ້ງ ແລະ ການຢັ້ງຢືນຄຸນລັກສະນະຂອງສະມາຊິກສະພາແຫ່ງຊາດ ຊຸດທີ X.

2. ພິຈາລະນາ ແລະ ຮັບຮອງເອົາບັນດາກົງຈັກແລະບຸກຄະລາກອນໃນຕຳແໜ່ງສຳຄັນຂອງອົງການລັດ ເປັນຕົ້ນ:

2.1 ພິຈາລະນາ, ຮັບຮອງເອົາກົງຈັກແລະບຸກຄະລາກອນຂອງສະພາແຫ່ງຊາດ ມີດັ່ງນີ້:

1) ເລືອກຕັ້ງເອົາປະທານສະພາແຫ່ງຊາດ ຊຸດທີ X ຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ ຊຸດທີ IX;

2) ເລືອກຕັ້ງເອົາບັນດາຮອງປະທານສະພາແຫ່ງຊາດ ແລະກຳມະການຄະນະປະຈຳສະພາແຫ່ງຊາດ ຕາມການສະເໜີຂອງປະທານສະພາແຫ່ງຊາດ ຊຸດທີ X;

3) ພິຈາລະນາ, ຮັບຮອງເອົາກົງຈັກຂອງສະພາແຫ່ງຊາດ ຊຸດທີ X ແລະ ການແຕ່ງຕັ້ງບັນດາປະທານກຳມາທິການ, ຫົວໜ້າຫ້ອງວ່າການສະພາແຫ່ງຊາດ ຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ ຊຸດທີ X.

2.2 ເລືອກຕັ້ງເອົາປະທານປະເທດແລະຮອງປະທານປະເທດ ຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ ຊຸດທີ X.

2.3 ພິຈາລະນາ, ຮັບຮອງເອົາບຸກຄະລາກອນ ແລະ ໂຄງປະກອບກົງຈັກຂອງລັດຖະບານ ມີດັ່ງນີ້:

1) ເລືອກຕັ້ງເອົານາຍົກລັດຖະມົນຕີ ຕາມການສະເໜີຂອງປະທານປະເທດ;

2) ພິຈາລະນາ, ຮັບຮອງເອົາໂຄງປະກອບກົງຈັກຂອງລັດຖະບານ ແລະ ການແຕ່ງຕັ້ງບັນດາຮອງນາຍົກລັດຖະມົນຕີແລະສະມາຊິກລັດຖະບານຕາມການສະເໜີຂອງນາຍົກລັດຖະມົນຕີ.

2.4 ເລືອກຕັ້ງເອົາປະທານສານປະຊາຊົນສູງສຸດ, ຫົວໜ້າອົງການໄອຍະການປະຊາຊົນສູງສຸດ, ປະທານອົງການກວດສອບແຫ່ງລັດ ແລະ ປະທານອົງການກວດກາແຫ່ງລັດຕາມການສະເໜີຂອງປະທານປະເທດ.

3. ພິຈາລະນາ, ຮັບຮອງເອົາບົດລາຍງານຂອງລັດຖະບານ, ສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ, ອົງການກວດສອບແຫ່ງລັດ, ອົງການກວດກາແຫ່ງລັດ ແລະ ສະພາແຫ່ງຊາດ ດັ່ງນີ້:

1) ບົດລາຍງານຂອງລັດຖະບານ ກ່ຽວກັບຮ່າງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X (2026-2030);

2) ບົດລາຍງານຂອງລັດຖະບານ ກ່ຽວກັບໂຄງການລົງທຶນກໍ່ສ້າງເສັ້ນທາງລົດໄຟ ແຕ່ຕົວເມືອງທ່າແຂກ ແຂວງຄຳມ່ວນ ຫາ ມູຢາ ຊາຍແດນລາວ-ຫວຽດນາມ ດ້ວຍຮູບແບບ BOT;

3) ບົດລາຍງານຂອງສານປະຊາຊົນສູງສຸດ ກ່ຽວກັບແຜນການເຄື່ອນໄຫວວຽກງານ 5 ປີ (2026-2030);

4) ບົດລາຍງານຂອງອົງການໄອຍະການປະຊາຊົນສູງສຸດ ກ່ຽວກັບແຜນການເຄື່ອນໄຫວວຽກງານ5ປີ(2026-2030);

5) ບົດລາຍງານຂອງອົງການກວດສອບແຫ່ງລັດ ກ່ຽວກັບແຜນການເຄື່ອນໄຫວວຽກງານ 5 ປີ (2026-2030);

6) ບົດລາຍງານຂອງອົງການກວດກາແຫ່ງລັດ ກ່ຽວກັບແຜນການເຄື່ອນໄຫວວຽກງານ 5 ປີ (2026-2030);

7) ບົດລາຍງານກ່ຽວກັບແຜນການເຄື່ອນໄຫວ 5 ປີ (2026-2030) ຂອງສະພາແຫ່ງຊາດ ຊຸດທີ X;

8.) ບົດລາຍງານກ່ຽວກັບແຜນການສ້າງ ແລະ ປັບປຸງກົດໝາຍ 5 ປີ (2026-2030) ຂອງສະພາແຫ່ງຊາດ ຊຸດທີ X.

4. ກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີX ຈະໄດ້ອອກເປັນມະຕິກອງປະຊຸມຈຳນວນທັງໝົດ19ສະບັບ.

ພ້ອມກັນນັ້ນ, ທ່ານຍັງແຈ້ງໃຫ້ຊາບວ່າ: ໃນໄລຍະກະກຽມ ແລະ ດຳເນີນກອງປະຊຸມ, ຫ້ອງວ່າການສະພາແຫ່ງຊາດໄດ້ຈັດຕັ້ງໜ່ວຍງານຮັບຄຳສະເໜີຂອງປະຊາຊົນຜ່ານໂທລະສັບສາຍດ່ວນ ເພື່ອຮັບເອົາຄຳຄິດຄຳເຫັນແລະຄຳສະເໜີໂດຍກົງຈາກປະຊາຊົນ ທີ່ຈະສົ່ງໄປຍັງກອງປະຊຸມສະພາແຫ່ງຊາດ ຕາມຂໍ້ມູນ ແລະ ວິທີການດັ່ງລຸ່ມນີ້:

- ນ້ຳເບີສາຍດ່ວນ: 156 ນັບແຕ່ວັນທີ 19-27 ມີນາ 2026 ໃນໂມງລັດຖະການ.
- ອີເມວ: nalao.156@gmail.com
- App: Laona.

## ປະທານ...

(ຕໍ່ຈາກໜ້າ 1)

ຊະອານາຈັກໄທ ໃນໂອກາດສະເດັດມາຢ້ຽມຢາມລັດຖະກິດ ສປປລາວ ລະຫວ່າງວັນທີ 16-18 ມີນາ 2026.

ໂອກາດດັ່ງກ່າວ, ທ່ານປະທານສະພາແຫ່ງຊາດ ປອ. ໄຊສົມພອນ ພົມວິຫານ ໄດ້ສະແດງຄວາມປິຕິຍິນດີແລະຮູ້ສຶກເປັນກຽດຢ່າງສູງທີ່ໄດ້ມີໂອກາດເຂົ້າຢ້ຽມຂ່ຳນັບພະບາດສົມເດັດພຣະອະຊິຣະເກົ້າເຈົ້າຢູ່ຫົວແລະສົມເດັດພະນາງເຈົ້າ ພຣະບໍຣົມລາຊິນີ ໃນໂອກາດທີ່ມາຢ້ຽມຢາມລັດຖະກິດຢູ່ ສປປລາວ ຄັ້ງນີ້ ພ້ອມທັງແຈ້ງໃຫ້ຊາບວ່າ ປະຊາຊົນລາວບັນດາເຜົ່າ ມີຄວາມປິຕິຍິນດີເປັນຢ່າງຍິ່ງ ແລະ ຄອງຄອຍໂອກາດອັນເປັນມົງຄຸນໃນການຕ້ອນຮັບການສະເດັດມາຢ້ຽມຢາມ ສປປລາວ ຂອງພະບາດສົມເດັດ ພຣະອະຊິຣະເກົ້າເຈົ້າຢູ່ຫົວ ແລະ ສົມເດັດພະນາງເຈົ້າພຣະບໍຣົມລາຊິນີຄັ້ງນີ້.

ໂອກາດອັນເປັນສິລິມົງຄຸນນີ້, ສອງຝ່າຍໄດ້ຕີລາຄາສູງຕໍ່ສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນໃກ້ຊິດລະຫວ່າງ ສປປລາວ ແລະ ລາຊະອານາຈັກໄທ ທີ່ໄດ້ຮັບການເສີມຂະຫຍາຍ ແລະ ພັດທະນາຢ່າງຕໍ່ເນື່ອງຕະຫຼອດມາ ເຊິ່ງສະແດງອອກໃນການແລກປ່ຽນການຢ້ຽມຢາມຂອງປະມຸກລັດທັງສອງປະເທດ ກໍຄືການນຳລະດັບຕ່າງໆ.

ທ່ານປະທານສະພາແຫ່ງຊາດ ໄດ້ສະແດງຄວາມຂອບໃຈຢ່າງສູງຕໍ່ການຊ່ວຍເຫຼືອອັນໃຫຍ່ຫຼວງຜ່ານໂຄງການພະລາຊະດຳລິຕ່າງໆ ທີ່ໄດ້ປະກອບສ່ວນອັນສຳຄັນໃຫ້ແກ່ການພັດທະນາ ສປປລາວ ແລະ ນຳເອົາຜົນປະໂຫຍດຕົວຈິງມາສູ່ປະຊາຊົນລາວ; ທ່ານ ປອ. ໄຊສົມພອນ ພົມວິຫານ ຍັງໄດ້ແຈ້ງໃຫ້ຊາບກ່ຽວກັບຜົນສຳເລັດຂອງການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງຊຸດທີV ແລະການກະກຽມດຳເນີນກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ X ທີ່ຈະມີຂຶ້ນໃນອາທິດໜ້ານີ້.

ໃນຂະນະດຽວກັນ, ພະບາດສົມເດັດ ພຣະອະຊິຣະເກົ້າເຈົ້າຢູ່ຫົວ ແຫ່ງ ລາຊະອານາຈັກໄທ ກໍໄດ້ສະແດງຄວາມຂອບໃຈຕໍ່ການຕ້ອນຮັບອັນອົບອຸ່ນ ແລະ ສະແດງຄວາມປິຕິຍິນດີເປັນຢ່າງຍິ່ງທີ່ໄດ້ສະເດັດມາຢ້ຽມຢາມ ສປປລາວ ໃນຄັ້ງນີ້ ພ້ອມທັງອວຍພອນໃຫ້ສາຍພົວພັນມິດຕະພາບ ແລະ ການຮ່ວມມືທີ່ມີມູນເຊື້ອອັນດີງາມລະຫວ່າງສອງປະເທດ ກໍຄືລະຫວ່າງສອງອົງການນິຕິບັນຍັດ ຈົ່ງຈະເລີນຮຸ່ງເຮືອງ ແລະ ແຕກດອກອອກຜົນຍິ່ງໆຂຶ້ນ ເພື່ອຜົນປະໂຫຍດຂອງປະຊາຊົນສອງຊາດ ໄທ-ລາວ.

# ສພຂ ຜົ້ງສາລີ ມອບ-ຮັບໜ້າທີ່



(ສພຂ) - ວັນທີ 10 ມີນາ, ທີ່ສະພາປະຊາຊົນແຂວງ ໂດຍພາຍໃຕ້ການເປັນປະທານຂອງທ່ານ ສົມຈິດ ທັບລະກອນ ກຳມະການປະຈຳພັກແຂວງ, ຮອງປະທານສະພາປະຊາຊົນແຂວງຜົ້ງສາລີ ແລະ ມີບັນດາທ່ານຄະນະປະສະພາປະຊາຊົນແຂວງ, ຫົວໜ້າຫ້ອງວ່າການສະພາປະຊາຊົນແຂວງ, ຮອງປະທານຄະນະກຳມະການ, ຫົວໜ້າຂະແໜງ ຈັດຕັ້ງ-ກວດກາ ແລະ ພະນັກງານ-ລັດຖະກອນ ຂອງຄະນະກຳມະການເຂົ້າຮ່ວມ.

ກອງປະຊຸມ ໄດ້ຮັບຟັງມະຕິ ວ່າດ້ວຍການຮັບຮອງເອົາການສະເໜີຍົກຍ້າຍກຳມະການຄະນະປະຈຳສະພາປະຊາຊົນແຂວງ, ປະທານຄະນະກຳມະການວັດທະນະທຳ-ສັງຄົມແລະບັນດາເຜົ່າ ສະບັບເລກທີ 65/ຄປຈຂ, ລົງວັນທີ 4 ມີນາ 2026; ພ້ອມນັ້ນກອງປະຊຸມຄະນະປະຈຳສະພາປະຊາຊົນແຂວງ ຕົກລົງຮັບຮອງເອົາການຍົກຍ້າຍທ່ານ ສົມຈິດ ລາວຈຸ່ງ ຮອງເລຂາໜ່ວຍພັກ, ກຳມະການປະຈຳສະພາປະຊາຊົນແຂວງ, ປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າສະພາປະຊາຊົນແຂວງ ໄປຮັບໜ້າທີ່ໃໝ່ຢູ່ອົງການແນວລາວສ້າງຊາດແຂວງຜົ້ງສາລີ ແລະ ໃຫ້ສືບຕໍ່ປະຕິບັດຕາມສິດແລະໜ້າທີ່ຂອງ ສະມາຊິກສະພາສະພາປະຊາຊົນແຂວງ ຕາມທີ່ໄດ້ລະບຸໃນມາດຕາ 27 ຂອງກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ (ສະບັບປັບປຸງ) ສະບັບເລກທີ 57/ສພຊ, ລົງວັນທີ 28 ມິຖຸນາ 2024 ແລະ ນິຕິກຳອື່ນທີ່ກ່ຽວຂ້ອງ ຂອງຄະນະປະຈຳສະພາປະຊາຊົນແຂວງ ຈົນໝົດສະໄໝຂອງສະມາຊິກສະພາປະຊາຊົນແຂວງ ຊຸດທີ IV; ຈາກນັ້ນກອງປະຊຸມໄດ້ຜ່ານບົດບັນທຶກການນຳພາ-ຊີ້ນຳວຽກງານຮອບດ້ານຂອງຄະນະກຳມະການວັດທະນະທຳ-ສັງຄົມແລະບັນດາເຜົ່າສະພາປະຊາຊົນແຂວງ, ພ້ອມທັງມອບ-ໜ້າທີແລະເຊັນບົດບັນທຶກ. ມອບໃຫ້ຮອງປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ.

**(ແກ້ວສະຫວ່າງ ໄຊຍະເງິນ)**

# ກອງປະຊຸມແລກປ່ຽນບົດຮຽນຂອງ ສພຂ 2 ແຂວງ




(ສພຂ) - ໃນວັນທີ 11 ມີນານີ້, ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງບໍ່ແກ້ວ ໄດ້ໄຂກອງປະຊຸມແລກປ່ຽນບົດຮຽນການຈັດຕັ້ງປະຕິບັດ ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງ ສພຂຂັ້ນແຂວງລະຫວ່າງສພຂ ບໍ່ແກ້ວ ກັບ ສພຂ ຄຳມ່ວນຂຶ້ນ ໂດຍພາຍໃຕ້ການເປັນປະທານຮ່ວມຂອງທ່ານ ບຸນມີ ພິມມະສອນ ປະທານສະພາປະຊາຊົນແຂວງຄຳມ່ວນແລະທ່ານຈອມສີ ລັດຕະນະປັນ ປະທານສະພາປະຊາຊົນແຂວງບໍ່ແກ້ວ ມີບັນດາທ່ານຮອງປະທານ, ບັນດາຄະນະປະຈຳສະພາປະຊາຊົນແຂວງ, ສະມາຊິກສະພາປະຊາຊົນແຂວງ, ປະທານ-ຮອງປະທານຄະນະກຳມະການ,ຫົວໜ້າ-ຮອງຫ້ອງວ່າການສະພາປະຊາຊົນແຂວງ, ຫົວໜ້າ-ຮອງຂະແໜງ ຕະຫຼອດຮອດພະນັກງານ-ລັດຖະກອນສະພາປະຊາຊົນແຂວງຄຳມ່ວນ ແລະ ບໍ່ແກ້ວ ເຂົ້າຮ່ວມ.

ຈຸດປະສົງ ກອງປະຊຸມຄັ້ງນີ້ແມ່ນເພື່ອແລກປ່ຽນບົດຮຽນ ໃນຫົວຂໍ້: ການຈັດຕັ້ງປະຕິບັດ 3 ພາລະບົດບາດ ຂອງສະພາປະຊາຊົນຂັ້ນແຂວງ ໃນໄລຍະ 05 ປີ ( (2021-2025) ຜ່ານມາເປັນຕົ້ນການຈັດຕັ້ງປະຕິບັດພາລະບົດບາດ,ສ ິດ ແລະ ໜ້າທີ່ດ້ານນິຕິກຳ, ດ້ານການຕົກລົງບັນຫາສຳຄັນພື້ນຖານຂອງແຂວງ ແລະ ດ້ານການຕິດຕາມກວດກາ. ໂອກາດນີ້ຄະນະປະທານ, ສສຊ-ສສຂ ແລະ ພະນັກງານ-ລັດຖະກອນ ທັງສອງແຂວງ ແມ່ນໄດ້ສົນທະນາແລກປ່ຽນບົດຮຽນເຊິ່ງກັນແລະກັນ ໃນ 3 ພາລະບົດບາດນັ້ນລວມທັງ ຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະບາງວຽກຈຸດສຸມທີ່ໄດ້ຈັດຕັ້ງປະຕິບັດຜ່ານມາແລະທິດທາງແຜນການທີ່ຈະສືບຕໍ່ໃນຕໍ່ໜ້າ; ຕອນທ້າຍຂອງກອງປະຊຸມແມ່ນໄດ້ມອບຂອງຂັວນທີ່ລະນຶກເຊິ່ງກັນແລະກັນ.



# ຖອດຖອນບົດຮຽນການເລືອກຕັ້ງ ສສຊ ຊຸດທີ X ແລະ ສສຂ ຊຸດທີ V



(ສພຂ) - ກອງປະຊຸມໄດ້ຈັດຂຶ້ນໃນວັນທີ 10 ມີນາ ທີຫ້ອງປະຊຸມຊັ້ນ5ຂອງສຳນັກງານອົງການປົກຄອງແຂວງ ໂດຍພາຍໃຕ້ການເປັນປະທານຂອງທ່ານ ພົຕ. ສົມພອນ ມົດຕະພອນ ກຳມະການສູນກາງພັກ ເລຂາຄະນະບໍລິຫານງານພັກແຂວງຜົ້ງສາລີ ປະທານຄະນະກຳມະການເລືອກຕັ້ງຂັ້ນແຂວງ, ມີທ່ານ ທອງສີ ເສົາສຸລິພົມ ປະທານສະພາປະຊາຊົນແຂວງຜົ້ງສາລີ ຮອງປະທານຄະນະກຳມະການເລືອກຕັ້ງຂັ້ນແຂວງ, ມີບັນດາທ່ານເລຂາຄະນະບໍລິຫານງານພັກເມືອງ ຈາກ 7 ເມືອງ, ຕະຫຼອດຮອດອານຸກຳມະການເລືອກຕັ້ງຂັ້ນແຂວງ ແລະ ຂັ້ນເມືອງ ແລະພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມ.

ກອງປະຊຸມໄດ້ຮັບຟັງການຜ່ານຮ່າງບົດສະຫຼຸບຕີລາຄາການກະກຽມແລະດຳເນີນການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນແຂວງຊຸດທີV ຈາກທ່ານ ທອງສີ ເສົາສຸລິພົມ ປະທານສະພາປະຊາຊົນແຂວງຜົ້ງສາລີ ຮອງປະທານ ຄະນະກຳມະການເລືອກຕັ້ງຊັ້ນແຂວງ ເຊິ່ງທ່ານໄດ້ຍົກໃຫ້ເຫັນບັນດາຜົນງານຜົນສຳເລັດໃນການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນແຂວງ ຊຸດທີ V ເປັນຕົ້ນແມ່ນວຽກງານຂອງແຕ່ລະອະນຸກຳມະກຳມະການເຊັ່ນ: ວຽກງານເລຂານຸການ,ວຽກງານໂຄງປະກອບ ແລະ ບຸກຄະລາກອນ, ວຽກງານໂຄສະນາ ແລະ ປຸກລະດົມຈະບວນການ, ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ວຽກງານບໍລິຫານ, ພິທີການ ແລະ ງົບປະມານ, ດ້ານດີ, ດ້ານອ່ອນ, ບົດຮຽນທີຖອດຖອນໄດ້ ແລະ ວຽກສືບຕໍ່ຈັດຕັ້ງປະຕິບັດໃນຕໍ່ໜ້າ. ຫຼັງຈາກນັ້ນ ໄດ້ຮັບຟັງສະພາບໂດຍລວມບັນຍາກາດໃນການປ່ອນບັດເລືອກຕັ້ງຄັ້ງນີ້ເຫັນວ່າປະຊາຊົນບັນດາເຜົ່າມີຄວາມກະຕືລືລົ້ນພ້ອມພຽງຮຽງໜ້າກັນໄປໃຊ້ສິດຂອງຕົ້ນດ້ວຍຄວາມສະໝັກໃຈເບີກບານມ່ວນຊື່ນແລະເປັນຂະບວນຝຶກຝົນດີເຮັດໃຫ້ການປ່ອນບັດສຳເລັດທັງຮັບປະກັນໄດ້ສີສ່ວນຮ້ອຍສັງລວມແລ້ວການປ່ອນບັດເລືອກຕັ້ງຄັ້ງນີ້ມີຜູ້ໄປໃຊ້ສິດເລືອກຕັ້ງທັງໝົດມີໜ້າຕົວຈິງ 109,352 ຄົນ, ຍິງ51,797ຄົນເທົ່າກັບ89% ຂອງຜູ້ມີສິດເລືອກຕັ້ງທັງໝົດ ສັງລວມໄດ້ວ່າໃນ7ເຂດເລືອກຕັ້ງຜ່ານການເລືອກຕັ້ງສະມາຊິກສະມາຊິກສະພາແຫ່ງຊາດຊຸດທີ X ແລະ ສະພາປະຊາຊົນແຂວງ ຊຸດທີ V ໃນຄັ້ງນີ້ສາມາດບັນລຸຕາມຈຸດປະສົງຄາດໝາຍທີວາງໄວ້ 400% ມີຜູ້ໄປໃຊ້ສິດເລືອກຕັ້ງ100%, ບໍ່ມີບັກຕາຍ 100% ແລະ ຮັບປະກັນຄວາມສະຫງົບປອດໄພ 100%.

ຈາກນັ້ນ, ບັນດາທ່ານຄະນະກຳມະການເລືອກຕັ້ງຂັ້ນເມືອງ,ຂັ້ນແຂວງໄດ້ພັດປ່ຽນກັນປະກອບຄຳຄິດຄຳເຫັນແລກປ່ຽນຢ່າງກົງໄປກົງມາຕໍ່ການເລືອກຕັ້ງສະມາຊິກສະມາຊິກສະພາແຫ່ງຊາດຊຸດທີ X ແລະສະພາປະຊາຊົນແຂວງຊຸດ ຊຸດທີ V ທີຜ່ານມາ,ໃນໂອກາດມີຄວາມໝາຍສຳຄັນນີ້ຄະນະກຳມະການເລືອກຕັ້ງຂັ້ນແຂວງຍັງໄດ້ມອບລົດຈັກແອບ 110 ຈຳນວນ, 7 ຄັນ,ຄອມພິວເຕີຕັ້ງໂຕ 14 ເຄື່ອງ, ປິ້ນເຕີ 7 ເຄື່ອງ; ລວມມູນຄ່າ 466,690.000 ກີບ ໃຫ້ແກ່ບັນດາເມືອງຕື່ມອີກ.

**(ພາບ-ຂ່າວ: ຍິນໄຊ)**



# ຖອດຖອນບົດຮຽນການເລືອກຕັ້ງ ສສຊ ຊຸດທີ X ແລະ ສສຂ ຊຸດທີ V



(ສພຂ)-ວັນທີ 13 ກຸມພາຜ່ານມາ, ຢູ່ທີ່ຫ້ອງປະຊຸມຫ້ອງວ່າການແຂວງ, ຄະນະກຳມະການເລືອກຕັ້ງຂັ້ນແຂວງ ໄດ້ຈັດກອງປະຊຸມສະຫຼຸບຖອດຖອນບົດຮຽນກ່ຽວກັບການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນແຂວງ ຊຸດທີ V ຂຶ້ນ, ໂດຍການເປັນປະທານຂອງທ່ານ ບຸນຄົງ ຫຼ້າຈຽມພອນ ກຳມະການສູນກາງພັກ, ເລຂາພັກແຂວງ, ປະທານຄະນະກຳມະການເລືອກຕັ້ງຂັ້ນແຂວງ, ມີທ່ານ ຄຳດີ ວົງລ້ອມຮອງເລຂາພັກແຂວງ,ຮອງປະທານຄະນະກຳມະການເລືອກຕັ້ງຂັ້ນແຂວງ, ປະທານສະພາປະຊາຊົນແຂວງ, ບັນດາທ່ານຄະນະກຳມະການເລືອກຕັ້ງຂັ້ນແຂວງ, ຂັ້ນເມືອງ,ກອງເລຂາຊ່ວຍວຽກ ແລະ ພະນັກງານວິຊາການຂະແໜງທີ່ກ່ຽວຂ້ອງເຂົ້າຮ່ວມ.

ກອງປະຊຸມ, ທ່ານ ຄຳດີ ວົງລ້ອມຮອງເລຂາພັກແຂວງ, ຮອງປະທານຄະນະກຳມະການເລືອກຕັ້ງຂັ້ນແຂວງ, ປະທານສະພາປະຊາຊົນແຂວງ, ໄດ້ຜ່ານຮ່າງບົດສະຫຼຸບຖອດຖອນບົດຮຽນການກະກຽມແລະດຳເນີນການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນແຂວງ ຊຸດທີ V, ເຊິ່ງບົດສະຫຼຸບໄດ້ຕີລາຄາການຈັດຕັ້ງປະຕິບັດວຽກງານດ້ານຕ່າງໆ ມີຜົນສຳເລັດໄປຕາມແຜນການ, ຕາມບາດກ້າວ ແລະ ທັນຕາມເວລາທີ່ໄດ້ກຳນົດໄວ້. ຜົນສຳເລັດນີ້,ແມ່ນໄດ້ມາຈາກຄວາມເອົາໃຈໃສ່ນຳພາຢ່າງໃກ້ຊິດຂອງຄະນະກຳມະການເລືອກຕັ້ງລະດັບຊາດ,ຄະນະກຳມະການເລືອກຕັ້ງຂັ້ນແຂວງ,ຂັ້ນເມືອງ,ຄວາມເປັນເຈົ້າການຂອງບັນດາອະນຸກຳມະການຕ່າງໆ,ຄະນະໜ່ວຍປ່ອນບັດເລືອກຕັ້ງ ໃນການເຊີດຊູສະຕິເປັນເຈົ້າການຈັດຕັ້ງປະຕິບັດໜ້າທີ່ວຽກງານຂອງຕົນແລະປະຊາຊົນບັນດາເຜົ່າພາຍ ໃນແຂວງໄດ້ເອົາໃຈໃສ່ໃນການປະກອບສ່ວນເຫື່ອແຮງ, ວັດຖຸປັດໃຈ ແລະ ຕື່ນຕົວເຂົ້າຮ່ວມການເລືອກຕັ້ງເປັນຕົ້ນແມ່ນ ໄປໃຊ້ສິດຢ່າງຖືກຕ້ອງ, ເຊິ່ງໄດ້ຢັ້ງຢືນເຖິງນ້ຳໃຈຮັກຊາດ, ຮັກລະບອບໃໝ່, ເຊື່ອໝັ້ນຕໍ່ການນຳພາຂອງພັກ ແລະ ປະກອບສ່ວນເຂົ້າໃນການປັບປຸງລະບົບການເມືອງຂອງປະເທດຊາດກໍຄືສະພາແຫ່ງຊາດແລະສະພາປະຊາຊົນແຂວງເຊິ່ງສາມາດປະຕິບັດໄດ້400%.

ຫຼັງຈາກນັ້ນ, ປະທານກອງປະຊຸມໄດ້ມີຄຳເຫັນເຈາະຈີ້ມ ແລະ ເປີດກ້ວາງໃຫ້ບັນດາທ່ານທີ່ເຂົ້າຮ່ວມປະກອບຄຳຄິດຄຳເຫັນຢ່າງກົງໄປກົງ, ເພື່ອຕີລາຄາດ້ານດີຜົນງານ, ດ້ານອ່ອນຂໍ້ຄົງຄ້າງທີ່ຄວນປັບປຸງແກ້ໄຂ ແລະຖອດຖອນບົດຮຽນ,ແລກປ່ຽນເຊິ່ງກັນ ແລະ ກັນ, ພ້ອມທັງຂໍ້ສະເໜີຕ່າງໆ ເຖິງຄະນະກຳມະການເລືອກຕັ້ງຂັ້ນແຂວງ,ຄະນະ ກຳມະການເລືອກຕັ້ງລະດັບຊາດເພື່ອເຮັດໃຫ້ການກະກຽມ ແລະ ດຳເນີນການເລືອກຕັ້ງໃນຕໍ່ໜ້າໄດ້ຮັບຜົນດີຂຶ້ນ ກວ່າເກົ່າ, ພ້ອມທັງຈັດຕັ້ງຜັນຂະຫຍາຍຜົນສຳເລັດບັ້ນເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນແຂວງ ຊຸດທີ V ຄັ້ງນີ້ໃຫ້ກ້ວາງຂວາງ ແລະ ທົ່ວເຖິງຕື່ມອີກ.

# ສພຂ ຫົວພັນ ມອບ-ຮັບເຄື່ອງຊ່ວຍເຫຼືອ ແລະ ສະເຫຼີມສະຫຼອງວັນແມ່ຍິງສາກົນ




(ສພຂ)-ວັນທີ 26 ກຸມພາຜ່ານມານີ້, ທ່ານ ບຸນເຊີຍ ແກ້ວນາຕານ ຫົວໜ້າທະນາຄານພັດທະນາຊົນນະບົດສາຂາແຂວງຫົວພັນ ພ້ອມຄະນະ ນຳເອົາຊຸດວອມ ມອບໃຫ້ສະພາປະຊາຊົນແຂວງ ເພື່ອນຳໃຊ້ເຂົ້າໃນກິດຈະກຳຂະບວນການຕ່າງໆ ໂດຍການກ່າວຮັບຂອງທ່ານ ປອ. ຄອນເສີດ ດອນວິໄຊ ຫົວໜ້າຫ້ອງວ່າການ ສະພາປະຊາຊົນແຂວງ, ເຄື່ອງທີ່ນຳມາມອບຄັ້ງນີ້ເປັນຊຸດວອມ ຈຳນວນ 19 ຊຸດລວມມູນຄ່າທັງມົດ 8.250.000 (ແປດລ້ານສອງແສນ ຫ້າສິບພັນກີບ) ຈາກນັ້ນທ່ານ ປອ. ຄອນເສີດ ດອນວິໄຊ ຕາງໜ້າສະພາປະຊາຊົນແຂວງໄດ້ສະແດງຄວາມຂອບໃຈ ທ່ານ ບຸນເຊີຍ ແກ້ວນາຕານ ຜູ້ຕາງໜ້າທະນາຄານພັດທະນາຊົນນະບົດ ສາຂາແຂວງຫົວພັນທີ່ໃຫ້ການອຸປະຖຳໃນຄັ້ງນີ້ ຂໍໃຫ້ກິດຈະການ ແລະການດຳເນີນງານຕ່າງໆຈະເລີນກ້າວໜ້າຂຶ້ນເລື້ອຍໆ.

ແລະ ເພື່ອເປັນການສະເຫຼີມສະຫຼອງວັນແມ່ຍິງສາກົນ ຄົບຮອບ 116 ປີ ໃນຕອນເຊົ້າວັນທີ 06 ມີນາຜ່ານມາ ແຂວງຫົວພັນ ໄດ້ຈັດພິທີສະເຫຼີມສະຫຼອງວັນແມ່ຍິງສາກົນ ຄົບຮອບ 116 ປີ ຂຶ້ນທີ່ຫໍວັດທະນະທຳແຂວງ ພາຍໃຕ້ການເຂົ້າຮ່ວມເປັນປະທານ ແລະ ປາຖະກະຖາເລົ່າມູນເຊື້ອ ໂດຍທ່ານ ຕົງ ລີເຕັ່ງກຳມະການປະຈຳພັກແຂວງ, ປະທານແນວລາວສ້າງຊາດແຂວງ, ຜູ້ຊີ້ນຳອົງການຈັດຕັ້ງມະຫາຊົນຂັ້ນແຂວງ. ມີທ່ານ ນາງ ແຍງເພັດ ບຸນມີໄຊ ກຳມະການພັກແຂວງ, ປະທານສະຫະພັນແມ່ຍິງແຂວງ, ການນຳແຂວງ, ພະແນກການ, ກົມກອງ, ອົງການຈັດຕັ້ງມະຫາຊົນ ແລະ ເອື້ອຍນ້ອງແມ່ຍິງບັນດາພະແນກການ, ກົມກອງອ້ອມຂ້າງແຂວງເຂົ້າຮ່ວມຢ່າງພ້ອມພຽງ.

# ຕີລາຄາຜົນສຳເລັດການເລືອກຕັ້ງ ສສຊ ຊຸດທີ X ແລະ ສສຂ ຊຸດທີ V



(ສພຂ) - ວັນທີ 16 ມີນານີ້, ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ສະຫວັນນະເຂດ ໄດ້ມີກອງປະຊຸມສະຫຼຸບ ແລະ ຕີລາຄາຜົນສຳເລັດຂອງການຈັດການເລືອກຕັ້ງສະມາຊິກສະພາແຫ່ງຊາດ (ສສຊ) ຊຸດທີ X ແລະ ສະມາຊິກສະພາປະຊາຊົນແຂວງ (ສສຂ) ຊຸດທີ V ໂດຍການປະທານຂອງທ່ານບຸນໂຈມ ອຸບົນປະເສີດ ກຳມະການສູນກາງພັກ, ເລຂາຄະນະບໍລິຫານງານພັກແຂວງສະຫວັນນະເຂດ,ປະທານຄະນະກຳມະການເລືອກຕັ້ງຂັ້ນແຂວງ; ເຂົ້າຮ່ວມມີທ່ານ ກົງແກ້ວ ມີວໍລະຈັກ ປະທານສະພາປະຊາຊົນແຂວງ,ຄະນະປະຈຳການຄະນະກຳມະການເລືອກຕັ້ງຂັ້ນແຂວງ; ມີບັນດາຄະນະກຳມະການ, ອະນຸກຳມະການ ແລະ ຜູ້ຕາງໜ້າຈາກພາກສ່ວນກ່ຽວຂ້ອງເຂົ້າຮ່ວມຢ່າງພ້ອມພຽງ.

ທ່ານ ຄຳຜັນ ດູນສະຫວັນ ຮອງປະທານສະພາປະຊາຊົນແຂວງ ຄະນະປະຈຳການຄະນະກຳມະການເລືອກຕັ້ງຂັ້ນແຂວງ ໄດ້ຂຶ້ນຜ່ານບົດລາຍງານການຈັດຕັ້ງປະຕິບັດວຽກງານຮອບດ້ານ ການກະກຽມ ແລະ ການເລືອກຕັ້ງ ສສຊ ແລະ ສສຂ ເຊິ່ງເຫັນໄດ້ເຖິງຄວາມບຸກບືນສູ້ຊົນໃນຂະບວນການກະກຽມ ແລະການດຳເນີນການເລືອກຕັ້ງທີ່ເຕັມໄປດ້ວຍຄວາມຮັບຜິດຊອບສູງ; ທຸກຂັ້ນຕອນໄດ້ຮັບການຈັດຕັ້ງປະຕິບັດຢ່າງຮັດກຸມ, ໂປ່ງໃສ ແລະ ຖືກຕ້ອງສອດຄ່ອງ ກັບລະບຽບກົດໝາຍຢ່າງເຂັ້ມງວດ ເຊິ່ງແມ່ນໝາກຜົນຂອງການຊີ້ນຳ-ນຳພາຢ່າງໃກ້ຊິດຈາກຄະນະພັກ-ຄະນະນຳທຸກຂັ້ນບວກກັບການປະສານງານທີ່ກົມກຽວຂອງບັນດາພາກສ່ວນແລະທີ່ສຳຄັນທີ່ສຸດແມ່ນຄວາມຕື່ນຕົວທາງດ້ານການເມືອງຂອງປະຊາຊົນບັນດາເຜົ່າທົ່ວແຂວງສະຫວັນນະເຂດ ທີ່ໄດ້ພ້ອມກັນອອກໄປໃຊ້ສິດເລືອກຕັ້ງຢ່າງຄຶກຄື້ນ ເຮັດໃຫ້ບັນຍາກາດການເລືອກຕັ້ງດຳເນີນໄປດ້ວຍຄວາມສະຫງົບ ປອດໄພ 100% ແລະບັນລຸຄາດໝາຍທີ່ວາງໄວ້ຢ່າງຈົບງາມ.

ຈາກນັ້ນ, ໄດ້ພ້ອມກັນຖອດຖອນບົດຮຽນ ດ້ວຍການຮ່ວມກັນປະກອບຄຳຄິດຄຳເຫັນ ແລະ ປະເມີນຜົນຢ່າງກົງໄປກົງມາເພື່ອຊອກຫາຈຸດດີທີ່ຈະຕ້ອງໄດ້ເສີມຂະຫຍາຍ ແລະ ຈຸດຄົງຄ້າງທີ່ຈະຕ້ອງໄດ້ຮັບການປັບປຸງເພື່ອເປັນບ່ອນອີງອັນໜັກແໜ້ນໃນການຍົກລະດັບຄຸນນະພາບ ແລະ ປະສິດທິຜົນຂອງການຈັດການເລືອກຕັ້ງໃນໄລຍະຕໍ່ໄປໃຫ້ກາຍເປັນບຸນປາງໃຫຍ່ແຫ່ງການເສີມສ້າງອຳນາດລັດທີ່ມາຈາກປະຊາຊົນ ໂດຍປະຊາຊົນ ແລະ ເພື່ອປະຊາຊົນຢ່າງແທ້ຈິງ.



# ການນຳແຂວງຈຳປາສັກ ພົບປະ ກຳລັງປ້ອງກັນຊາດເມືອງປາກຊ່ອງ



(ສພຂ) - ວັນທີ 2 ມີນາຜ່ານມາ, ທ່ານ ແກ້ວລັດຕະນະ ສີຫາວົງ ຄະນະປະຈຳພັກແຂວງ, ຮອງປະທານສະພາປະຊາຊົນແຂວງຈຳປາສັກ, ທ່ານ ຈັນທະບູນ ແກ້ວປະເສີດ ກຳມະການພັກແຂວງ, ຫົວໜ້າພະແນກແຮງງານ ແລະ ສະຫວັດດີການ-ສັງຄົມ, ທ່ານ ບຸນລົດ ເທບບຸນສູງ ກຳມະການພັກແຂວງ, ເລຂາຄະນະບໍລິຫານງານພັກເມືອງປາກຊ່ອງ ພ້ອມດ້ວຍບັນດາຄະນະນຳຈາກພະແນກການ-ກົມກອງ, ອົງການຈັດຕັ້ງຕ່າງໆ ແລະ ພາກສ່ວນທຸລະກິດ ອ້ອມຂ້າງແຂວງ ໄດ້ເຄື່ອນໄຫວພົບປະຢ້ຽມຢາມນາຍ ແລະພົນທະຫານ ບັນດາກົມກອງກຳລັງປ້ອງກັນຊາດ 5 ກົມກອງ ຄື: ກອງບັນຊາການທະຫານເມືອງ, ຄ 902, ຄ 158, ຄ 575, ຄ ຜະລິດ ທີ່ຕັ້ງຢູ່ເມືອງປາກຊ່ອງ.

ໃນການເຄື່ອນໄຫວໄດ້ຮັບຟັງການລາຍງານສະພາບການເຄື່ອນໄຫວວຽກງານຮອບດ້ານຈາກຕ່າງໜ້າຄະນະພັກ-ຄະນະບັນຊາແຕ່ລະກົມກອງ; ຈາກນັ້ນ, ທ່ານ ແກ້ວລັດຕະນະ ສີຫາວົງ ໄດ້ເນັ້ນໜັກໃຫ້ເອົາໃຈໃສ່ກໍ່ສ້າງຮາກຖານການເມືອງໃຫ້ເຂັ້ມແຂງ ແລະ ໜັກແໜ້ນ; ຍົກລະດັບຄວາມສາມາດ ໃນເອົາໃຈໃສ່ເຝິກແອບສິລະປະຍຸດ-ຍຸດທະວິທີ ໃຫ້ມີຄວາມຊຳນານງານ; ເພີ່ມທະວີການກຸ້ມຕົນເອງ ແລະ ສ້າງເສດຖະກິດຄອບຄົວ-ກົມກອງ ແລະ ເພີ່ມທະວີຄວາມສາມັກຄີ ແລະ ການຮ່ວມມືກັບເພື່ອນມິດຍຸດທະສາດ.

ການເຄື່ອນໄຫວບັນດາທ່ານຄະນະນຳແລະ ພາກສ່ວນທຸລະກິດຂອງແຂວງແລະເມືອງປາກຊ່ອງ ຈຳນວນ 14 ພາກສ່ວນຄື: ສະພາປະຊາຊົນແຂວງ, ຫ້ອງວ່າການແຂວງ, ພະແນກແຮງງານ ແລະ ສະຫວັດດີການ-ສັງຄົມ, ຄະນະນຳເມືອງປາກຊ່ອງ, ພາກສ່ວນທຸລະກິດ (ບໍລິສັດເພັດສະຫວ່າງ ຮ່ວມພັດທະນາກາເຟ, ໂຮງງານຜະລິດຢາຊີບີເອັບ, ບໍລິສັດອຸດົມສິນ, ບໍລິສັດສົມໄຊ ຈະເລີນ, ບໍລິສັດ ພົວພັນຄົບວົງຈອນ, ໂຮງແຮມທັດດາວັນ, ໂຮງງານເຫຼົ້າ ເມືອງຄົງເຊໂດນ, ບໍລິສັດກໍ່ສ້າງ ພິແອນ ພີ ແລະ ຮ້ານຕົວແທນຈຳໜ່າຍລົດຮອນດາ ສາຂາປາກເຊ ແລະ ບໍລິສັດ ທ່ອງທ່ຽວ ທະນົງໄຊ) ໄດ້ຮ່ວມກັນນຳເອົາເຄື່ອງອຸປະໂພກ-ບໍລິໂພກ ແລະ ເງິນສົດຈຳນວນ 30 ລ້ານກີບ ລວມມູນຄ່າ 75 ລ້ານກີບ ມອບໃຫ້ແກ່ບັນດາກົມກອງເພື່ອເປັນກຳລັງໃຈແກ່ນັກຮົບນາຍ ແລະ ພົນທະຫານຂອງກຳລັງປ້ອງກັນຊາດເມືອງປາກຊ່ອງ ໄດ້ນຳໃຊ້ເຂົ້າໃນວຽກງານລວມຂອງກົມກອງໃຫ້ເກີດປະໂຫຍດສູງສຸດ.

**(ສົມວິຈິດ ໄຊມິນຕີ ແລະ ພັດທະນາ ສີຫາວົງ)**




# ຖອດຖອນບົດຮຽນການເລືອກຕັ້ງ ສສຊ ຊຸດທີ X ແລະ ສສຂ ຊຸດທີ V




(ສພຂ) - ວັນທີ 13 ມີນານີ້ ທີ່ສະໂມສອນສະພາປະຊາຊົນແຂວງ (ສພຂ) ເຊກອງ ໄດ້ມີກອງປະຊຸມສະຫຼຸບຖອດຖອນບົດຮຽນການກະກຽມ ແລະ ການດຳເນີນບັ້ນເລືອກຕັ້ງສະມາຊິກສະພາແຫ່ງຊາດ (ສສຊ) ຊຸດທີ X ແລະ ສະມາຊິກສະພາປະຊາຊົນແຂວງ (ສສຂ) ເຊກອງ ຊຸດທີ V ໂດຍການເປັນປະທານຂອງທ່ານ ບຸນຫຼາຍ ບຸດທີ ກຳມະການສູນກາງພັກ, ເລຂາຄະນະບໍລິຫານງານພັກແຂວງເຊກອງ, ປະທານຄະນະກຳມະການເລືອກຕັ້ງຂັ້ນແຂວງ; ເຂົ້າຮ່ວມມີທ່ານ ດົງເພັດ ພະຍົນ ປະທານສະພາປະຊາຊົນແຂວງ; ມີບັນດາທ່ານຄະນະປະຈຳພັກແຂວງ, ຄະນະກຳມະການເລືອກຕັ້ງຂັ້ນແຂວງ-ຂັ້ນເມືອງ, ອະນຸກຳມະການຕ່າງໆ ແລະ ກອງເລຂາເຂົ້າຮ່ວມ.

ທ່ານ ໃຈເພັດ ພັນທະວົງ ກຳມະການພັກແຂວງ, ປະທານຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ, ຫົວໜ້າອະນຸກຳມະການເລຂານຸການຄະນະກຳມະການເລືອກຕັ້ງຂັ້ນແຂວງໄດ້ຜ່ານຮ່າງບົດສະຫຼຸບການກະກຽມ ແລະ ການດຳເນີນບັ້ນເລືອກຕັ້ງ ສສຊ ຊຸດທີ X ແລະ ສສຂ ຊຸດທີ V ໂດຍຍົກໃຫ້ເຫັນສະພາບລວມ, ຕີລາຄາຜົນການຈັດຕັ້ງປະຕິບັດວຽກງານ ແຕ່ບາດກ້າວທີ 1 ຮອດບາດກ້າວທີ 4 ຕົ້ນຕໍແມ່ນວຽກງານເລຂານຸການ; ວຽກງານໂຄງປະກອບແລະບຸກຄະລາກອນ; ວຽກງານໂຄສະນາ, ປຸກລະດົມຂະບວນການ ແລະ ຍ້ອງຍໍ; ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ວຽກບໍລິຫານ, ພິທີການ ແລະ ງົບປະມານ ທັງຍົກໃຫ້ເຫັນສະພາບລວມໃນການດຳເນີນການປ່ອນບັດເລືອກຕັ້ງ ແລະ ບັນລຸຄາດໝາຍ 400%; ທ່ານຍັງລາຍງານໃຫ້ຮູ້ຕື່ມອີກວ່າ: ການເລືອກຕັ້ງ ສສຊ ຊຸດທີ X ປະຈຳເຂດເລືອກຕັ້ງທີ 16 ເລືອກໄດ້ 07 ທ່ານ, ຍິງ 02 ທ່ານ ກວມເອົາ 28,57% ຂອງຜູ້ໄດ້ຮັບການເລືອກຕັ້ງ ແລະ ຜູ້ໄດ້ຮັບເລືອກຕັ້ງເປັນ ສສຂ ຊຸດທີ V ຈຳນວນ 25 ທ່ານ, ຍິງ 07 ທ່ານ ກວມເອົາ 28% ຂອງຜູ້ໄດ້ຮັບການເລືອກຕັ້ງ.

ຈາກນັ້ນ, ບັນດາຄະນະກຳມະການເລືອກຕັ້ງຂັ້ນແຂວງ-ຂັ້ນເມືອງ ແລະ ບັນດາອະນຸກຳມະການຕ່າງໆ ໄດ້ຜັດປ່ຽນກັນປະກອບຄຳຄິດຄຳເຫັນຢ່າງກົງໄປກົງມາ ຍົກໃຫ້ເຫັນຈຸດດີ, ຈຸດອ່ອນ, ຂໍ້ຄົງຄ້າງ ໃນການຈັດຕັ້ງປະຕິບັດ ໃນໄລຍະທີ່ຜ່ານມາ ບົດຮຽນທີ່ຖອດຖອນໄດ້ໃນວຽກງານດັ່ງກ່າວເພື່ອພ້ອມກັນນຳໄປປັບປຸງ ແລະ ເປັນບົດຮຽນໃນການຈັດຕັ້ງປະຕິບັດໃນຄັ້ງຕໍ່ໄປໃຫ້ດີຂຶ້ນກວ່າເກົ່າ.

**(ນາລີວັນ)**




# ລາຍຊື່ຜູ້ໄດ້ຮັບເລືອກຕັ້ງເປັນ ສສຂ ອັດຕະປື



(ສພຂ) - ວັນທີ 27 ກຸມພາຜ່ານມາ, ທ່ານ ນາງ ມີນາພອນ ໄຊສົມພູ ປະທານສະພາປະຊາຊົນແຂວງ, ຮອງປະທານຄະນະກຳມະການເລືອກຕັ້ງຂັ້ນແຂວງ ໄດ້ຕາງໜ້າໃຫ້ຄະນະປະຈຳການ ຄະນະກຳມະການເລືອກຕັ້ງຂັ້ນແຂວງປະກາດລາຍຊື່ຜູ້ໄດ້ຮັບເລືອກເປັນ ສະມາຊິກສະພາປະຊາຊົນແຂວງຊຸດທີ V ຈຳນວນ 25 ທ່ານ, ຍິງ 5 ທ່ານ (ຍິງກວມເອົາ 20 %) ມີລາຍຊື່ດັ່ງລຸ່ມນີ້:

**- ເມືອງສາມັກຄີໄຊ: ມີ 5 ທ່ານ, ຍິງ1 ທ່ານ:**

1. ທ່ານ ອິນປັນ ອິນທິລາດ ກຳມະການພັກແຂວງ, ເລຂາຄະນະບໍລິຫານງານພັກເມືອງສາມັກຄີໄຊ;

2. ທ່ານ ນ ຈັນທະລີ ສີສຸວົງ ຮອງເລຂາຄະນະພັກຮາກຖານ, ປະທານຄະນະກຳມະການ ປກຊ-ປກສ ແລະ ຍຸຕິທຳ ສະພາປະຊາຊົນແຂວງ;

3. ທ່ານ ສຸດໃຈ ມາໄຊຍະວົງກຳມະການພັກເມືອງ,ຫົວໜ້າຄະນະໂຄສະນາອົບຮົມເມືອງ;

4. ທ່ານ ພູວົງ ດວງພູໄຊ ກຳມະການພັກເມືອງ, ຫົວໜ້າຫ້ອງການຍຸຕິທຳເມືອງ;

5. ທ່ານ ຂັນອາສາ ພົມມະສອນ ຮອງເລຂາໜ່ວຍພັກ, ຫົວໜ້າຂະແໜງນິຕິກຳ ແລະ ຍຸຕິທຳ ສະພາປະຊາຊົນແຂວງ.

**- ເມືອງໄຊເສດຖາ: ຈຳນວນມີ 5 ທ່ານ, ຍິງ 1 ທ່ານ:**

1. ທ່ານ ສົມໄຊ ແກ້ວມະນີວັນ ກຳມະການພັກແຂວງ, ເລຂາຄະນະບໍລິຫານງານພັກເມືອງໄຊເສດຖາ;

2. ທ່ານ ຂັນທະລອນ ພອນວັນນາ ຄະນະພັກຮາກຖານ, ຮອງປະທານກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າສະພາປະຊາຊົນແຂວງ;

3. ທ່ານ ແສງອາລຸນ ກຸນລະວົງ ຮອງເລຂາໜ່ວຍພັກ, ຮອງຫົວໜ້າຫ້ອງວ່າການສະພາປະຊາຊົນຂັ້ນແຂວງ;

4. ທ່ານ ສໍສົມຊາຍ ພົມມະຈັກ ກຳມະການພັກເມືອງ, ຫົວໜ້າຫ້ອງການຍຸຕິທຳເມືອງ;

5. ທ່ານ ນາງ ດວງມີໄຊ ສິດທະປະເສີດ ຮອງປະທານແນວລາວສ້າງຊາດແຂວງ;

**- ເມືອງຊານໄຊ: ມີ 5 ທ່ານ, ຍິງ 1 ທ່ານ:**

1. ທ່ານ ທັດສະໄນ ສີບຸນເຫຼືອງ ກຳມະການພັກແຂວງ, ເລຂາຄະນະບໍລິຫານງານພັກເມືອງຊານໄຊ;

2. ທ່ານ ທອງວັນ ຢວງຢາເຢຍ ຄະນະປະຈຳພັກເມືອງ, ປະທານກວດກາພັກ-ລັດ ເມືອງຊານໄຊ;

3. ທ່ານ ສຽງໃຈ ແກ້ວຄຳໂກ້ກຳມະການພັກເມືອງ, ເລຂາພັກກຸ່ມບ້ານຊຳຫຼວງ;

4. ທ່ານ ຄຳປະດິດ ສີຊານົນຄະນະພັກຮາກຖານ, ຫົວໜ້າອຳນວຍການລັດວິສາຫະກິດນ້ຳປະປາ ແຂວງອັດຕະປື;

5. ທ່ານ ນາງ ລັດສະໝອນວົງໂພສີຮອງເລຂາໜ່ວຍພັກ, ຮອງປະທານສະຫະພັນແມ່ຍິງເມືອງ;

ອ່ານຕໍ່ໜ້າ 7




# ຜູ້ໄດ້ຮັບຜົນກະທົບທາງສຽງ ຕ້ອງລາຍງານຜ່ານສາຍດ່ວນ

**# ແນວລາວ**

ມີການຕັ້ງບັນຫາເລື່ອງການເຂັ້ມງວດຕໍ່ຄຳສັ່ງ ຫຼື ແຈ້ງການ ວ່າເຮົາເຮັດໄດ້ຊໍ່າໃດ? ພວກເຮົາມີການຈັດຕັ້ງຕິດຕາມແລະກວດກາຢ່າງໃດ? ເພາະເຫັນວ່າບໍ່ຄ່ອຍເຂັ້ມງວດ ຫຼື ມີປະສິດທິຜົນເທົ່າທີ່ຄວນວ່າຊັ້ນ! ແນ່ນອນມັນມີຫຼາຍບັນຫາ ແຕ່ເພິ່ນຍົກຕົວຢ່າງເລື່ອງດຽວຢູ່ນະຄອນຫຼວງວຽງຈັນຄື: ຄຳສັ່ງຫ້າມເປີດສຽງ ແລະ ເສບດົນຕີດັງລົບກວນເຮືອນຂ້າງຄຽງ ภายເວລາ 23: 00 ໂມງນັ້ນ ມີຄຳສັ່ງແຕ່ປີ 2023 ພຸ້ນ ແຕ່ການປະຕິບັດບໍ່ໄດ້ຮັບຜົນ; ໃນແຈ້ງການມີການລະບຸໃຫ້ຜູ້ທີ່ໄດ້ຮັບຜົນກະທົບ ໂທລະສັບສາຍດ່ວນແຈ້ງໝາຍເລກ 02028899774 ຂອງກອງບັນຊາການປ້ອງກັນຄວາມສະຫງົບນະຄອນຫຼວງວຽງຈັນ ແລະ ໝາຍເລກ 020 55609035, 020 52555512 ຂອງພະແນກວັດທະນະທຳ ແລະ ການທ່ອງທ່ຽວນະຄອນຫຼວງວຽງຈັນ. ໃນການຈັດຕັ້ງປະຕິບັດແມ່ນໃຫ້ເຈົ້າໜ້າທີ່ ປກສ-ກອງຫຼອນ ບ້ານ, ປກສເມືອງ, ທະຫານເມືອງ ແລະ ເຈົ້າໜ້າທີ່ຂະແໜງວັດທະນະທຳແລະການທ່ອງທ່ຽວແຕ່ລະຂັ້ນເປັນເຈົ້າການແຕ່ງຕັ້ງຜູ້ຮັບຜິດຊອບ;ຜູ້ປະຈຳການ,ຕິດຕາມ, ກວດກາ ແລະ ບັງຄັບປະຕິບັດມາດຕະການທີ່ວາງອອກຢ່າງເຂັ້ມງວດ ແລະ ລາຍງານກໍລະນີລະເມີດມາດຕະການ ໃຫ້ຂັ້ນເທິງຂອງຕົນຊາບຢ່າງປົກກະຕິ. ພົນລະເມືອງທີ່ໄດ້ຮັບຜົນກະທົບຈາກມົນລະພິດທາງສຽງລາຍງານຫຼື ໂທແຈ້ງຜ່ານສາຍດ່ວນ, ພົນລະເມືອງທຸກຄົນ ຍົກສູງຄວາມຮັບຜິດຊອບຕໍ່ສັງຄົມ, ຄອບຄົວເຮືອນຂ້າງຄຽງ ແລະ ເຄົາລົບປະຕິບັດມາດຕະການຢ່າງເຂັ້ມງວດ. ນັ້ນແມ່ນຜູ້ຂຽນສັງລວມເນື້ອໃນຈິດໃຈຫຼັກຂອງແຈ້ງການເນີ! ແຕ່ພວກເຮົາກໍຕ້ອງຍອມຮັບວ່າການຈັດຕັ້ງປະຕິບັດ ບໍ່ຄ່ອຍເຂັ້ມງວດພໍປານໃດ? ແລ້ວຈະມີມາດຕະການແກ້ພະຍາດຊໍາເຮື້ອນີ້ຢ່າງໃດ?

ຜ່ານການສົນທະນາກໍມີຄຳເຫັນວ່າ: ພາຍຫຼັງມີຄຳສັ່ງ ຫຼື ແຈ້ງການ ກໍຄວນມີຄະນະກຳມະການກວດກາ ໝາຍວ່າມີການແຕ່ງຕັ້ງມອບຄວາມຮັບຜິດຊອບໄປພ້ອມໆກັນວ່າຊັ້ນ! ເຮັດເປັນແບບຄະນະສະເພາະກິດກ່ຽວກັບແຕ່ລະບັນຫາທີ່ຄຳສັ່ງ ຫຼື ແຈ້ງການ ອອກມາ. ຄະນະສະເພາະກິດນີ້ ຕ້ອງລົງເຮັດວຽກໂດຍມີການແຈ້ງຜ່ານສື່ມວນຊົນເປັນໄລຍະ ໃຜຝ່າຝືນກໍຕ້ອງປະຕິບັດຕາມລະບຽບກົດໝາຍຢ່າງເຂັ້ມງວດ ໄປຄຽງຄູ່ກັບການອອກຂ່າວລຽນຕິດຜ່ານສື່ມວນຊົນ ເພື່ອເປັນການແຈ້ງຂ່າວ ແລະ ປະຈານສິ່ງທີ່ບໍ່ດີ, ສິ່ງຫຍໍ້ທໍ້ ໃຫ້ທົ່ວສັງຄົມໄດ້ຮັບຮູ້; ພາຍຫຼັງສຳເລັດ, ຄະນະສະເພາະກິດ ກໍຕ້ອງມີການປະຊຸມຖອດຖອນບົດຮຽນ ເພື່ອສະເໜີຂັ້ນເທິງຖັດຕົນ ວາງມາດຕະການຕໍ່ໄປໃຫ້ເໝາະສົມ ແລະ ມີປະສິດທິຜົນສູງກວ່າເກົ່າ ຫາກມີແຈ້ງການ ຫຼື ຄຳສັ່ງ ອອກມາ.

ຍອມຮັບວ່າເວົ້າງ່າຍ ແຕ່ຂອດຈັດຕັ້ງປະຕິບັດນີ້ຍາກຫຼາຍ, ແຕ່ບໍ່ແມ່ນວ່າເຫັນວ່າຍາກແລ້ວອອກນ້ຳເຢັນ ເພາະຫາກຊໍາເຮື້ອຢູ່ແບບນີ້ ມັນກໍຈະກາຍເປັນຂີ້ປາກຂອງສັງຄົມ ຄືໄດ້ເວົ້າຂ້າງເທິງນັ້ນລະ! ສຳຄັນ, ໃນເມື່ອໄດ້ຮັບການແຈ້ງຜ່ານສາຍດ່ວນແລ້ວ ເຈົ້າໜ້າທີ່ກ່ຽວຂ້ອງຈະຈົກຈັກ ຫຼື ບໍ່ ນໍ? ຂໍສະເໜີເປັນບັ້ງເລກໃຫ້ຄິດຫງໍາ.

## ລາຍຊື່...

(ຕໍ່ຈາກໜ້າ 6)

**- ເມືອງສະໜາມໄຊ: ມີ 5 ທ່ານ, ຍິງ 1 ທ່ານ:**

1. ທ່ານ ຄຳໂພໄຊ ໄຊຍະເສນາ ກຳມະການພັກແຂວງ, ເລຂາຄະນະບໍລິຫານງານພັກເມືອງສະໜາມໄຊ;

2. ທ່ານ ພົງສະຫວັນ ພົມມະວົງຄະນະໜ່ວຍພັກ, ຮອງປະທານສະຫະພັນກຳມະບານແຂວງ;

3. ທ່ານ ຄຳສິນ ສອນຈັນມາ ກຳມະການພັກເມືອງ, ຫົວໜ້າຫ້ອງການແຮງງານແລະສະຫວັດດີການ-ສັງຄົມ ເມືອງ;

4. ທ່ານ ພອນໄຊ ອິນທິວົງກຳມະການພັກເມືອງ, ຫົວໜ້າໂຍທາທິການ ແລະ ຂົນສົ່ງເມືອງ;

5. ທ່ານ ນ ສີງຄຳ ໂລຫະສານ ຮອງເລຂາໜ່ວຍພັກ, ຮອງປະທານສະຫະພັນແມ່ຍິງເມືອງ;

**-ເມືອງພູວົງ: ມີ5ທ່ານ, ຍິງ 1 ທ່ານ.**

1. ທ່ານ ດາບແກ້ວ ໄຊຍະແສງ ກຳມະການພັກແຂວງ, ເລຂາຄະນະບໍລິຫານງານພັກເມືອງພູວົງ;

2. ທ່ານ ແສງປະດິດ ສຸດນາມສຸລິນ ຄະນະພັກຮາກຖານ, ຮອງປະທານຄະນະກຳມະການເສດຖະກິດ, ການເງິນແລະສິ່ງແວດລ້ອມ ສະພາປະຊາຊົນແຂວງ;

3. ທ່ານ ສຸກດາວເຮືອງ ພົວຄຳພັນ ກຳມະການພັກເມືອງ, ຮອງປະທານກວດກາລັດເມືອງ;

4. ທ່ານ ນ ສຸກວິໄລ ວຽງໄຊ ຄະນະໜ່ວຍພັກ, ຮອງປະທານສະຫະພັນແມ່ຍິງແຂວງ;

5. ທ່ານ ຄຳປຸນ ແກ້ວປະເສີດຄະນະພັກຮາກຖານ, ອຳນວຍການໂຮງຮຽນ ມສ ນາງແຮ່ວ;

ສະມາຊິກສະພາປະຊາຊົນຂັ້ນແຂວງ ຊຸດທີ V ມີຜູ້ສະໝັກມາຈາກແຂວງ 8 ທ່ານ, ຍິງ 3 ທ່ານ; ຈາກເມືອງ16 ທ່ານ, ຍິງ 2 ທ່ານ; ຈາກລັດວິສາຫະກິດມີ 1 ທ່ານ, ຍິງ 0 ທ່ານ; ອາຍຸກະສຽນ : 45 ປີ ລົງມາ ມີ 8 ທ່ານ, ຍິງ 1 ທ່ານ; 46-55 ປີ ມີ 13 ທ່ານ, ຍິງ 3 ທ່ານ; 56-60 ປີ ມີ 4 ທ່ານ, ຍິງ 1 ທ່ານ; ລະດັບການສຶກສາມັດທະຍົມປາຍ ມີ 25 ທ່ານ, ຍິງ 5 ທ່ານ; ລະດັບວິຊາສະເພາະ: ຊັ້ນສູງ ມີ 1 ທ່ານ, ຍິງ 1 ທ່ານ; ປະລິນຍາຕີ ມີ 15 ທ່ານ, ຍິງ 3 ທ່ານ; ປະລິນຍາໂທ ມີ 9 ທ່ານ, ຍິງ 1 ທ່ານ; ລະດັບທິດສະດີ: ຂັ້ນຕົ້ນ ມີ 1 ທ່ານ, ຍິງ 0 ທ່ານ; ຂັ້ນກາງ ມີ 7 ທ່ານ, ຍິງ 2 ທ່ານ ແລະ ຂັ້ນສູງ ມີ 17 ທ່ານ, ຍິງ 3 ທ່ານ.

# ລາຍຊື່ຜູ້ໄດ້ຮັບເລືອກຕັ້ງເປັນ ສສຂ ໄຊສົມບູນ



(ສພຂ) - ວັນທີ 2 ມີນານີ້, ທ່ານ ນາງ ຄຳສີ ສິດທິວໍລະດາ, ຄະນະປະຈຳພັກແຂວງ, ຫົວໜ້າຄະນະໂຄສະນາອົບຮົມແຂວງໄຊສົມບູນ, ຮອງຫົວໜ້າອະນຸກຳມະການໂຄສະນາ, ປຸກລະດົມຂະບວນການ ໄດ້ຕາງໜ້າໃຫ້ຄະນະກຳມະການເລືອກຕັ້ງຂັ້ນແຂວງ ປະກາດລາຍຊື່ຜູ້ທີ່ໄດ້ຮັບການເລືອກຕັ້ງເປັນສະມາຊິກສະພາປະຊາຊົນແຂວງໄຊສົມບູນ ຊຸດທີ V ເຊິ່ງມີຈຳນວນ 25 ທ່ານ, ຍິງ 6 ທ່ານ ລາຍລະອຽດ ດັ່ງນີ້:

**- ເຂດເລືອກຕັ້ງເມືອງອະນຸວົງ ມີ 5 ທ່ານ, ຍິງ 1 ທ່ານ ຄື:**

1. ທ່ານ ພັດທະນາ ສີສົມພອນ ກຳມະການພັກແຂວງ, ເລຂາຄະນະບໍລິຫານງານພັກເມືອງ;

2. ທ່ານ ນາງ ແສງຈັນ ນາມມີໄຊ ກຳມະການພັກເມືອງ, ປະທານສະຫະພັນແມ່ຍິງເມືອງ;

3. ທ່ານ ບຸນກອງ ຊົ່ງປາຢົ້ງ ກຳມະການພັກແຂວງ, ຮອງຫົວໜ້າຄະນະຈັດຕັ້ງແຂວງ;

4. ທ່ານ ພັທ. ຟອງສະໄໝ ຊໍ່ແສງທອງ ຄະນະພັກກອງບັນຊາການ ປກສ ແຂວງ, ຮອງຫົວໜ້າກອງບັນຊາການ ປກສ ແຂວງ;

5. ທ່ານ ຢີຊົ່ງ ຕົ່ງເລັ່ງ ຮອງເລຂາໜ່ວຍພັກ, ຮອງເລຂາທິການສະພາປະຊາຊົນແຂວງ.

**- ເຂດເລືອກຕັ້ງເມືອງທ່າໂທມ ມີ 5 ທ່ານ, ຍິງ 2 ທ່ານ ຄື:**

1. ທ່ານ ສຸກສະເຫຼີມ ສົມມະນີ ກຳມະການພັກແຂວງ, ເລຂາຄະນະບໍລິຫານງານພັກເມືອງ;

2. ທ່ານ ພັທ. ພົມພອນ ອຸ່ນທະວິສັກ ກຳມະການພັກເມືອງ, ຫົວໜ້າການເມືອງກອງບັນຊາການທະຫານເມືອງ;

3. ທ່ານ ນາງ ຄຳຫຼ້າ ທອງສີວອນ ຮອງເລຂາໜ່ວຍພັກ, ຮອງປະທານຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ ສະພາປະຊາຊົນແຂວງ;

4. ທ່ານ ນາງ ນວນສີ ວັນວິໄລ ກຳມະການພັກເມືອງ, ເລຂາຄະນະບໍລິຫານງານຊາວໜຸ່ມເມືອງ;

5. ທ່ານ ບຸນມີ ມິ່ງລັດສະໝີ ກຳມະການພັກເມືອງ, ເລຂາຄະນະພັກຮາກຖານຫ້ອງການກະສິກຳ ແລະ ສິ່ງແວດລ້ອມ.

**- ເຂດເລືອກຕັ້ງເມືອງລ້ອງຊານ ມີ 5 ທ່ານ, ຍິງ 1 ທ່ານ ຄື:**

1. ທ່ານ ພົມມາ ແກ້ວບົວພາ ກຳມະການພັກແຂວງ, ເລຂາຄະນະບໍລິຫານງານພັກເມືອງ;

2. ທ່ານ ບຸນມີ ໄຊຍະຊ່າງ ຮອງປະທານຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ ສະພາປະຊາຊົນແຂວງ;

3. ທ່ານ ນາງ ສຸລິວອນ ແກ້ວແກ່ນຈັນ ກຳມະການພັກເມືອງ, ຫົວໜ້າຫ້ອງການແຮງງານ ແລະ ສະຫວັດດີການ-ສັງຄົມ;

4. ທ່ານ ສົມດີ ຈັນທະວົງ ເລຂາໜ່ວຍພັກ, ປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ສະພາປະຊາຊົນແຂວງ;

5. ທ່ານພຸດຊົ່ງຕົ່ງນາມມະວົງ ກຳມະການພັກເມືອງ, ຫົວໜ້າຫ້ອງວ່າການກະສິກຳ ແລະ ສິ່ງແວດລ້ອມເມືອງ.

**- ເຂດເລືອກຕັ້ງເມືອງລ້ອງແຈ້ງ ມີ 5 ທ່ານ, ຍິງ 1 ທ່ານ ຄື:**

1. ທ່ານ ບຸນຜອງ ຄຳມະນີວົງ ກຳມະການພັກແຂວງ, ເລຂາຄະນະບໍລິຫານງານພັກເມືອງ;

2. ທ່ານ ແສງຈັນ ປະເສີດກຸນ ກຳມະການພັກຮາກຖານ, ຮອງຫົວໜ້າພະແນກການເງິນແຂວງ;

3. ທ່ານ ທອງໄມ ຊຸນໂຍທາ ຮອງເລຂາທິການສະພາປະຊາຊົນແຂວງ;

4. ທ່ານ ນາງ ພົງມະນີ ຈັນສົມບັດເລຂາໜ່ວຍພັກ, ປະທານສະຫະພັນແມ່ຍິງເມືອງ;

5. ທ່ານ ພັຕ. ສັກໄຊ ພົມມະສອນຄະນະພັກຮາກຖານກອງບັນຊາການ ປກສ ເມືອງ, ຮອງຫົວໜ້າກອງບັນຊາການ ປກສ ເມືອງ.

**- ເຂດເລືອກຕັ້ງເມືອງຮົ່ມ ມີ 5 ທ່ານ, ຍິງ 1 ທ່ານ ຄື:**

1. ທ່ານ ຄຳພຸດ ແກ້ວວົງພອນກຳມະການພັກແຂວງ, ເລຂາຄະນະບໍລິຫານງານພັກເມືອງ;

2. ທ່ານ ບີ ເຮີ່ ຄະນະພັກຮາກຖານ, ຮອງເລຂາທິການສະພາປະຊາຊົນແຂວງ;

3. ທ່ານ ເນັ້ງທ່າວ ເພຍຫຼວງກຳມະການພັກເມືອງ, ຫົວໜ້າຫ້ອງການວັດທະນະທຳ ແລະ ການທ່ອງທ່ຽວເມືອງ;

4. ທ່ານ ນາງ ອານົງ ທົງທະວົງ ກຳມະການພັກເມືອງ, ປະທານສະຫະພັນແມ່ຍິງເມືອງ;

5. ທ່ານ ຢົງຢີ ລີເຢ່ຍວື່ ຮອງເລຂາທິການສະພາປະຊາຊົນແຂວງ.





**ສຸກສະບາຍຫາຍໂລດ**

# ຄຸນປະໂຫຍດຂອງນ້ຳໝາກພ້າວ ແລະ ຂໍ້ຄວນລະວັງ

**# ຮຽບຮຽງໂດຍ: ດອກຜັກກາດ**



ນ້ຳໝາກພ້າວທີ່ເຮົາຮູ້ຈັກດີ ແລະ ຍັງເປັນທີ່ນິຍົມນຳມາດື່ມ ເຊິ່ງບໍ່ພຽງແຕ່ເພີ່ມຄວາມສົດຊື່ນ ແຕ່ຍັງເປັນເຄື່ອງດື່ມເກືອແຮ່ຈາກທຳມະຊາດ ເຊິ່ງໃນນ້ຳໝາກພ້າວແມ່ນມີຄຸນປະໂຫຍດຫຼາກຫຼາຍ ແລະ ກໍຍັງມີຂໍ້ຄວນລະວັງ ທີ່ບໍ່ຄວນເບິ່ງຂ້າມ ມື້ນີ້ຄໍລຳສຸກສະບາຍຫາຍໂລດ ຈະມານຳສະເໜີ8ຄຸນປະໂຫຍດ ແລະ ຂໍ້ຄວນລະວັງ ຂອງນ້ຳໝາກພ້າວ ດັ່ງນີ້:

1. ເພີ່ມຄວາມສົດຊື່ນ ຟື້ນຟູຮ່າງກາຍຫຼັງເສຍເຫື່ອ: ການດື່ມນ້ຳໝາກພ້າວຫຼັງອອກກຳລັງກາຍຈະຊ່ວຍເພີ່ມຄວາມສົດຊື່ນໄດ້ດີກວ່າການກິນນ້ຳດື່ມເກືອແຮ່;

2. ເປັນແຫຼ່ງລວມວິຕາມິນ: ບີ1, ບີ2, ບີ3, ບີ6 ແລະ ວິຕາມິນຊີ ແລະ ແຮ່ທາດອີກຫຼາຍຢ່າງ;

3. ຊ່ວຍໃຫ້ຜິວກະຈ່າງໃສ: ການດື່ມນ້ຳໝາກພ້າວ ຈະຊ່ວຍສ້າງຄໍລາເຈນ ແລະ ອີລາດຕິນ ເພື່ອຄວາມຍືດຍຸ່ນໃຫ້ຜິວຊ່ວຍໃຫ້ຜິວກະຈ່າງໃສຂຶ້ນ;

4. ເສີມພູມຕ້ານທານ: ໃນນ້ຳໝາກພ້າວມີໄຊໂທຄາຍ ຊ່ວຍຫຼຸດຄວາມສ່ຽງໂຣກສະໝອງເຊື່ອມ;

5. ຊ່ວຍຍ່ອຍອາຫານ ແລະ ບັນເທົາອາການເຈັບທ້ອງ: ຊ່ວຍຫຼຸດອາການກົດໄຫຼຍ້ອນ ແລະ ນ້ຳໝາກພ້າວຍັງເໝາະກັບຜູ້ທີ່ເປັນບັນຫາໂຣກກະເພາະ;

6.ຂັບປັດສະວະ:ຊ່ວຍຫຼຸດຄວາມສ່ຽງບັນຫາປັດສະວະອັກເສບ;

7. ຊ່ວຍປັບສົມດຸນຮໍໂມນເພດຍິງ: ຫຼຸດອາການໄວທອງ ອາລົມແປປວນ;

8. ຊ່ວຍເສີມຖະມັດທະພາບທາງເພດ: ໂດຍຈະກະຕຸ້ນການໄຫຼວຽນເລືອດ ເຮັດໃຫ້ຮ່າງກາຍແຂງແຮງທັງຍິງ ແລະ ຊາຍ.

ສຳລັບຂໍ້ຄວນລະວັງ: ນ້ຳໝາກພ້າວຫາກດື່ມຫຼາຍເກີນໄປກໍບໍ່ດີເຊັ່ນກັນ ເພາະຄົນທີ່ເປັນພະຍາດໝາກໄຂ່ຫຼັງ ແລະ ເບົາຫວານ ຕ້ອງປຶກສາໝໍກ່ອນ ເພາະໃນນ້ຳໝາກພ້າວມີໂພແທສຊຽມ ແລະ ນ້ຳຕານສູງ ເຖິງແມ່ນວ່າຈະເປັນນ້ຳຕານຈາກທຳມະຊາດ ແຕ່ໃນນ້ຳໝາກພ້າວ 1 ໜ່ວຍ ມີນ້ຳຕານສູງເຖິງ 5,1 ບ່ວງກາເຟ ແລະ ຖ້າດື່ມຫຼາຍເກີນໄປ ກໍຈະເຮັດໃຫ້ຕຸ້ຍໄດ້; ນອກຈາກນີ້, ການດື່ມນ້ຳໝາກພ້າວຈະເຮັດໃຫ້ຮໍໂມນເອັສໂຕຣເຈນເພີ່ມຫຼາຍຂຶ້ນ ອາດຈະເພີ່ມການກະຕຸ້ນການບີບຕົວຂອງມົດລູກໃນຊ່ວງທີ່ມີປະຈຳເດືອນ; ເຖິງວ່າການດື່ມນ້ຳໝາກພ້າວຈະມີປະໂຫຍດຫຼາກຫຼາຍແຕ່ກໍຄວນດື່ມໃນປະລິມານທີ່ເໝາະສົມ ເພື່ອສຸຂະພາບທີ່ດີໃນທຸກມື້.

**ແຫຼ່ງທີ່ມາ:**
**TARGET Magazine**

---

ອາດ ກະວີລາວ

# ເປັນຜູ້ແທນແລ້ວ

**# ດອກຊ້ອນ ດອນໂຂງ**

※ ເກີນວ່າແສນຊື່ນຊ້ອຍ
ຖືກເລືອກມາເປັນຜູ້ແທນ
ໃຫ້ແກ່ປະຊາເຊື້ອ
ເອົາບັນຫາທີ່ຄ້າງ

ບານເບັ່ງອຸລາ ຮຽມເດ
ນັ່ງສະພາຕາງໜ້າ
ຊາວລາວບັນດາເຜົ່າ
ໄຂຂໍ້ຂອດຄາ

※ ຫ້າງທ່າກຽມວຽກບ້ານ
ສຸມໃຈໃສ່ບັນຫາ
ກ່ອນຈະແປງທາງໃຫ້
ຮັບຜິດຊອບເທື່ອເວົ້າ

ກ່ອນນັ່ງໃນປະຊຸມ
ແຕກປະເດັນເຫັນແຈ້ງ
ອະພິປາຍຕາມຂອບ
ກົງເປົ້າຖືກປະເດັນ

※ ພີ່ນ້ອງຈິ່ງເຊື່ອໝັ້ນ
ເປີດກ່ອງຍັງຫອມຫວນ
ກັ່ນກອງກຽມພ້ອມ
ເພື່ອປະຊາພີ່ນ້ອງ

ຜູ້ແທນໃໝ່ມາແຮງ
ກິ່ນອາຍຫອມກຸ້ມ
ຂໍ້ມູນມາມອບ
ທີ່ຄອງຖ້າຮັບຟັງ

※ ຕັ້ງໃຈຟັງທຸກເລື້ອງ
ລັດແລະກົດໝາຍປັບປຸງ
ສອດຄ່ອງສັງຄົມໃຫ້
ເຊີດຊູປະຊາທິປະໄຕຮຸ່ງກ້າວ

ທີ່ມາຜ່ານໃນສະພາ
ປ່ຽນແປງໃຫ້ຖືກຕ້ອງ
ເດີນໄປຄຽງຄູ່
ແຂງເຂັ້ມຊົ່ວນິລັນ

※ ທຸກວັນຕ້ອງຮຽບຮ້ອຍ
ເຊັ່ງຊື່ ສສ
ຟັງຜູ້ອະພິປາຍຂໍ້
ຕີນເອງກຽມວຽກບ້ານ

ບໍ່ໃຫ້ຂາດຂານສຽງ
ນັ່ງປະຊຸມເລີງເລື້ອຍ
ໄຂຄວາມຂານຂອດ
ເພື່ອໄຂຂໍ້ຖືກປະເດັນຊອບແລ້ວ!

---



**ຫັກຫາຍ ລະບາຍ**

*(ເລື່ອງເບົາໆ ເອົ້າແບບກັນເອງ ບໍ່ເຄັ່ງພິທີການ)*

**# ສຽມທ້ຽນ**

※ **ທີ 22 ມີນາ** ແມ່ນວັນສ້າງຕັ້ງພັກປະຊາຊົນປະຕິວັດລາວ ກ້າວສູ່ **71 ປີ** ຮຽນຮ່ວາໄສເອທີບົ ຍ່ຍື່ນພອນໄຊ ໄປຍັງການນຳພັກ-ລັດ ທົ່ວລາວເໜືອ-ໃຕ້ ເປັນຫອບໄພໃສແຈ້ງ ແຍງທາງປະຊາໄຕ່ ໃຫ້ລາວເຮືອງຮຸ່ງກ້າວ ໃສເຫຼື້ອມກວ່າແຕ່ຫຼັງ **ຊອບແລ້ວ!**

※ **ຕາມ**ການຄະແຫຼງແຈ້ງຢ່າງເປັນທາງການໃນຕອນແລງຂອງວັນທີ **18 ມີນາ** ຈາກຫົວໜ້າຫ້ອງວ່າການສະພາແຫ່ງຊາດ ວ່າ: ທີ **23-27 ມີນາ** ສະພາແຫ່ງຊາດຊຸດທີ **X** ຈະໄດ້ເຂົ້າສູ່ວາລະດຳເນີນກອງປະຊຸມຄັ້ງປະຖົມມະລຶກ ທີ່ຕຶກສະພາແຫ່ງຊາດ ຈຶ່ງແມ່ນຄັກກະດໍ ສສຊ ໃໝ່ຕົວແທນກະກຽມການປ່ຽນແປງ ເພື່ອຮັບຮອງໃຊ້ ພິຈາລະນາກົງຈັກພ້ອມ ແຜນງານໄລຍະໃໝ່ ເພື່ອພັດທະນາລາວສົ່ງໃຫ້ ຈະເລີນກ້າວລື່ນກວ່າຫຼັງ **ຄັກເດ!**

---

**ຊອບຍິ້ມ**

**# ພົ້ງອຶ່ງ**

## ເລື່ອງ: ຢ່າຮູ້ເລີຍ

ທິດສີ ໄປຍ່າງຫຼິ້ນຢູ່ຕະຫຼາດແຫ່ງໜຶ່ງ, ພໍດີໄປຢຸດຢູ່ຕໍ່ໜ້າຮ້ານຄ້າ; ລາວໄປສະດຸດຕາກັບສາຍຄໍຄຳເສັ້ນໜຶ່ງ ຈຶ່ງກົ້ມລົງເບິ່ງເຮັດໃຫ້ຕົດອອກດັງແປ໊ດ... ລາວເລີຍຫຼຽວໄປຫຼຽວມາ ເຫັນພະນັກງານຂາຍຄົນໜຶ່ງກຳລັງຢືນອົມຍິ້ມຢູ່, ລາວເລີຍຖາມແບບເກີຍເຂີນໆ ເພື່ອແກ້ອາຍໄປວ່າ:

"ສາຍຄໍເສັ້ນນີ້ລາຄາເທົ່າໃດ?"

ພະນັກງານຕອບໄປວ່າ:

"ຂະໜາດແບນຊື່ໆຍັງຕົດແຕກ,ຄັນຂ້ອຍບອກລາຄາຈັກຊິເປັນຈັ່ງໃດເດບໍ່!!!"



**ສຸພາສິດ-ຄະຕິເຕືອນໃຈ**

**# ດອກຫຍ້າ**

"ຄວາມອົດທົນ ເປັນຕົ້ນໄມ້ທີ່ມີລົດຊາດຂົມ ແຕ່ຜົນຜະລິດຂອງມັນສຸດແສນຫອມຫວານ"

ລັດຖະສະພາຕ່າງປະເທດ

# ສະພານິຕິບັນຍັດແຫ່ງຊາດຈີນ ປິດສະໄໝປະຊຸມປະຈຳປີ



(Xinhua) - ກອງປະຊຸມສະໄໝສາມັນເທື່ອທີ4ຂອງສະພາຜູ້ແທນປະຊາຊົນທົ່ວປະເທດຈີນ (NPC) ຊຸດທີ XIV ໄດ້ປິດລົງເມື່ອວັນພະຫັດທີ 12 ມີນາພາຍຫຼັງດຳເນີນມາແຕ່ວັນທີ 5 ມີນາຜ່ານມາ ທີ່ຫໍປະຊຸມໃຫຍ່ຂອງປະຊາຊົນໃນນະຄອນຫຼວງປັກກິ່ງ ໂດຍການເປັນປະທານຂອງ ຈ້າວ ເລີ້ຈີ້ ປະທານ NPC ເຊິ່ງມີປະທານປະເທດ ສີ ຈິ້ນຜິງ ແລະ ການນຳຂັ້ນສູງຄົນອື່ນໆ ລວມທັງສະມາຊິກສະພາ 2,762 ຄົນ ເຂົ້າຮ່ວມ.

ກອງປະຊຸມໄດ້ລົງມະຕິ:

- ອະນຸມັດບົດລາຍງານການເຄື່ອນໄຫວວຽກງານຂອງລັດຖະບານ ແລະ ຮ່າງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ XV (2026-2030).

- ຮັບຮອງປະມວນກົດໝາຍນິເວດວິທະຍາ ແລະ ສິ່ງແວດລ້ອມ, ກົດໝາຍການສົ່ງເສີມຄວາມສາມັກຄີແລະຄວາມກ້າວໜ້າຂອງບັນດາເຜົ່າ, ແລະ ກົດໝາຍການວາງແຜນພັດທະນາແຫ່ງຊາດ; ສີ ຈິ້ນຜິງ ໄດ້ລົງນາມໃນຄຳສັ່ງປະທານປະເທດເພື່ອປະກາດໃຊ້ກົດໝາຍເຫຼົ່ານີ້.

- ອະນຸມັດບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ປີ 2025 ແລະ ຮ່າງແຜນການປີ 2026, ແລະ ອະນຸມັດແຜນການປີ 2026.

- ອະນຸມັດບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ແລະ ຂອງທ້ອງຖິ່ນ ສຳລັບປີ 2025 ແລະ ຮ່າງແຜນງົບປະມານແຫ່ງລັດ ແລະ ຂອງທ້ອງຖິ່ນ ສຳລັບປີ2026,ແລະອະນຸມັດແຜນງົບປະມານແຫ່ງລັດສຳລັບປີ2026.

- ອະນຸມັດບົດລາຍງານການເຄື່ອນໄຫວວຽກງານຂອງຄະນະປະຈຳສະພາຜູ້ແທນປະຊາຊົນທົ່ວປະເທດຈີນ, ສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ.

ນອກຈາກນີ້, ຍັງມີມະຕິວ່າດ້ວຍການຮັບຮອງເອົາບົດລາຍງານຂອງຄະນະປະຈຳສະພາຜູ້ແທນປະຊາຊົນທົ່ວປະເທດຈີນກ່ຽວກັບການເຄື່ອນໄຫວວຽກງານປັບປຸງກົດໝາຍ ແລະ ມາດຕະການທີ່ສະເໜີກ່ຽວກັບກົດໝາຍ ແລະ ມະຕິບາງສະບັບ ໂດຍ ສີ ຈິ້ນຜິງ ໄດ້ລົງນາມໃນຄຳສັ່ງຂອງປະທານປະເທດກ່ຽວກັບມະຕິເຫຼົ່ານີ້.

ໃນຄຳປາໄສປິດກອງປະຊຸມ, ຈ້າວ ກ່າວວ່າ ໄລຍະເວລາແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດສະບັບທີ15ເປັນໄລຍະເວລາສຳຄັນທີ່ສຸດໃນການເສີມສ້າງຮາກຖານ ແລະ ຊຸກຍູ້ຄວາມກ້າວໜ້າໃນທຸກດ້ານເພື່ອບັນລຸເປົ້າໝາຍການພັດທະນາສັງຄົມນິຍົມທີ່ທັນສະໄໝໂດຍພື້ນຖານພາຍໃນປີ2035,ແລະການຈັດຕັ້ງປະຕິບັດແຜນການຢ່າງມີປະສິດທິພາບ ແມ່ນມີຄວາມສຳຄັນຢ່າງຍິ່ງ; ຈ້າວເນັ້ນໜັກເຖິງຄວາມຈຳເປັນທີ່ຈະຕ້ອງສຸມໃສ່ການຄຸ້ມຄອງບໍລິຫານກິດຈະການພາຍໃນປະເທດໃຫ້ດີແລະພະຍາຍາມເລີ່ມຕົ້ນແຜນການຫ້າປີຄັ້ງທີ 15 ຢ່າງເຂັ້ມແຂງ; ເຂົາກ່າວຕື່ມວ່າ ສະພາປະຊາຊົນ ຄວນປະຕິບັດໜ້າທີ່ຂອງຕົນ ແລະ ໃຫ້ການຮັບປະກັນທາງດ້ານກົດໝາຍເພື່ອບັນລຸເປົ້າໝາຍ ແລະ ພາລະກິດຂອງແຜນການສະບັບນີ້.

# ກຳປູເຈຍ ອະນຸມັດຮ່າງກົດໝາຍຕ້ານການຫຼອກລວງທາງອອນລາຍ



(Xinhua) - ເນດ ພຽກຕຣາ (Neth Pheaktra) ລັດຖະມົນຕີກະຊວງຖະແຫຼງຂ່າວ ກ່າວວ່າ ລັດຖະບານກຳປູເຈຍ ອະນຸມັດຮ່າງກົດໝາຍວ່າດ້ວຍການຕໍ່ຕ້ານການຫຼອກລວງທາງອອນລາຍ ເມື່ອວັນສຸກທີ 13 ມີນານີ້ ເຊິ່ງຈະກຳນົດການລົງໂທດຢ່າງຮຸນແຮງຕໍ່ຜູ້ຫຼອກລວງ; ການອະນຸມັດດັ່ງກ່າວ ມີຂຶ້ນລະຫວ່າງກອງປະຊຸມຄະນະລັດຖະມົນຕີປະຈຳອາທິດ ເຊິ່ງມີນາຍົກລັດຖະມົນຕີຮຸນ ມາເນັດ(Hun Manet) ເປັນປະທານ.

“ກົດໝາຍສະບັບນີ້ແມ່ນເຄື່ອງມືທາງກົດໝາຍທີ່ສຳຄັນທີ່ສຸດສຳລັບກຳປູເຈຍ ໃນການຕໍ່ສູ້ກັບການຫຼອກລວງທາງອອນລາຍ, ການຟອກເງິນ ແລະ ສະແດງໃຫ້ເຫັນວ່າ ກຳປູເຈຍ ບໍ່ແມ່ນສະຫວັນ ຫຼື ບ່ອນລີ້ໄພສຳລັບອາຊະຍາກອນ; ກຳປູເຈຍ ບໍ່ແມ່ນ ແລະ ຈະບໍ່ມີວັນເປັນບ່ອນລີ້ໄພສຳລັບອາຊະຍາກອນຫຼອກລວງທາງອອນລາຍ”ພຽກຕຣາ ກ່າວກັບຊິນຮວາ ທັງເສີມກ່າວວ່າ: ຮ່າງກົດໝາຍສະບັບນີ້ຈະຊ່ວຍປ້ອງກັນ ແລະ ກຳຈັດການຫຼອກລວງທາງອອນລາຍອອກຈາກດິນແດນກຳປູເຈຍ.

ພາຍໃຕ້ຮ່າງກົດໝາຍ, ຫົວໜ້າສູນຫຼອກລວງທາງອອນລາຍ ຈະຕ້ອງຮັບໂທດຕັດອິດສະລະພາບລະຫວ່າງ 5-10 ປີ ແລະ ປັບໃໝສູງສຸດ 1 ຕື້ຣຽລ (riel) ຫຼື ປະມານ 250,000 ໂດລາແລະຫາກພົບວ່າການກະທຳຂອງພວກເຂົາ ມີສ່ວນກ່ຽວຂ້ອງກັບຄວາມຮຸນແຮງ, ການທໍລະມານ, ການກັກຂັງທີ່ຜິດກົດໝາຍ, ການຄ້າມະນຸດ ຫຼື ການບັງຄັບໃຊ້ແຮງງານ, ພວກເຂົາຈະຕ້ອງຮັບໂທດຕັດອິດສະລະພາບ 10-20 ປີ ແລະ ປັບໃໝສູງສຸດ 2 ຕື້ຣຽລ (ປະມານ 500,000 ໂດລາ); ນອກຈາກນັ້ນ, ຫົວໜ້າກຸ່ມຫຼອກລວງທາງອອນລາຍ ຈະຕ້ອງຮັບໂທດຕັດອິດສະລະພາບ 15-30 ປີ ຫຼື ຕະຫຼອດຊີວິດ ຫາກການກະທຳຂອງພວກເຂົານຳໄປສູ່ການເສຍຊີວິດໜຶ່ງຄົນ ຫຼື ຫຼາຍກວ່ານັ້ນ, ຮ່າງກົດໝາຍລະບຸຕື່ມວ່າ ຜູ້ຫຼອກລວງທາງອອນລາຍ ຈະຕ້ອງຮັບໂທດຕັດອິດສະລະພາບ 2-5 ປີ ແລະ ປັບໃໝສູງສຸດ 500 ລ້ານຣຽລ (ປະມານ 125,000 ໂດລາ).

ຮ່າງກົດໝາຍສະບັບນີ້ຈະຕ້ອງໄດ້ຮັບການຮັບຮອງຈາກສະພາແຫ່ງຊາດ ແລະ ຜ່ານການກວດຄືນຂັ້ນສຸດທ້າຍໂດຍສະພາສູງ ກ່ອນທີ່ຈະສົ່ງໄປຍັງກະສັດ ໂນໂຣດົມ ສີຫາໂມນີ (Norodom Sihamoni) ເພື່ອປະກາດໃຊ້.

ປະເທດໃນອາຊີຕາເວັນອອກສຽງໃຕ້ແຫ່ງນີ້ ໄດ້ເລີ່ມດຳເນີນການປາບປາມເຄືອຂ່າຍການຫຼອກລວງທາງອິນເຕີເນັດທົ່ວປະເທດຢ່າງທີ່ບໍ່ເຄີຍມີມາກ່ອນ ເພື່ອຮັກສາສະຖຽນລະພາບທາງສັງຄົມ, ຄວາມປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງປະຊາຊົນ, ແລະ ເພື່ອຟື້ນຟູພາບພົດຂອງລາຊະອານາຈັກໃນເວທີສາກົນ ໂດຍທາງການໃຫ້ຄຳໝັ້ນສັນຍາວ່າຈະກຳຈັດສູນກາງການຫຼອກລວງທາງອອນລາຍທັງໝົດພາຍໃນເດືອນເມສາປີນີ້.

ສາຣ໌ ໂສກາ (Sar Sokha) ລັດຖະມົນຕີກະຊວງພາຍໃນ ກ່າວວ່າ: ກຳປູເຈຍ ໄດ້ເນລະເທດຊາວຕ່າງຊາດທີ່ຖືກສົງໄສວ່າເປັນຜູ້ຫຼອກລວງຫຼາຍກວ່າ 30,000 ຄົນ, ຂະນະທີ່ອີກກວ່າ 210,000 ຄົນ ໄດ້ອອກຈາກລາຊະອານາຈັກດ້ວຍຄວາມສະໝັກໃຈ ຫຼັງຈາກປະຕິບັດການຕໍ່ຕ້ານການສໍ້ໂກງທາງອອນລາຍທີ່ເຂັ້ມງວດຂຶ້ນນັບຕັ້ງແຕ່ເດືອນມິຖຸນາປີຜ່ານມາ.

# ສະພາ ສ.ເກົາຫຼີ ຜ່ານຮ່າງກົດໝາຍພິເສດວ່າດ້ວຍການລົງທຶນໃນສະຫະລັດ



(Xinhua) - ວັນທີ 12 ມີນານີ້, ສະພາແຫ່ງຊາດ ສ.ເກົາຫຼີ ໄດ້ຜ່ານຮ່າງກົດໝາຍພິເສດວ່າດ້ວຍການລົງທຶນທາງຍຸດທະສາດໃນສະຫະລັດອາເມລິກາ ເຊິ່ງເປັນມາດຕະການຕໍ່ເນື່ອງຈາກຂໍ້ຕົກລົງດ້ານພາສີກັບວໍຊິງຕັນ; ການຜ່ານຮ່າງກົດໝາຍດັ່ງກ່າວ ເກີດຂຶ້ນຫຼັງຈາກການລົງນາມໃນບົດບັນທຶກຄວາມເຂົ້າໃຈ (MOU) ລະຫວ່າງເຊອູນ ແລະ ວໍຊິງຕັນ ເມື່ອເດືອນພະຈິກປີຜ່ານມາ ສຳລັບການລົງທຶນທາງຍຸດທະສາດຂອງ ສ.ເກົາຫຼີ ໃນສະຫະລັດ ມູນຄ່າ 350 ຕື້ໂດລາ.

ບໍລິສັດລົງທຶນທາງຍຸດທະສາດ ຈະຖືກສ້າງຕັ້ງຂຶ້ນເພື່ອຈັດຕັ້ງປະຕິບັດການລົງທຶນ ໂດຍມີການຈັດສັນ 150 ຕື້ໂດລາ ໃຫ້ແກ່ອຸດສາຫະກຳຕໍ່ເຮືອ ແລະ 200 ຕື້ໂດລາ ໃຫ້ແກ່ຂະແໜງການທີ່ຈະເສີມຂະຫຍາຍຜົນປະໂຫຍດທາງເສດຖະກິດ ແລະ ຄວາມໝັ້ນຄົງແຫ່ງຊາດຂອງທັງສອງປະເທດ; ບໍລິສັດດັ່ງກ່າວຈະມີທຶນຈົດທະບຽນ 2 ພັນຕື້ວອນ (1.4 ຕື້ໂດລາ) ທີ່ໄດ້ຮັບເງິນທຶນສະໜັບສະໜູນເຕັມຈຳນວນຈາກລັດຖະບານ.

ເຊອູນ ແລະ ວໍຊິງຕັນ ໄດ້ສະຫຼຸບຂໍ້ຕົກລົງດ້ານພາສີ ແລະ ຄວາມໝັ້ນຄົງ ເມື່ອເດືອນພະຈິກປີຜ່ານມາ ໂດຍ ສ.ເກົາຫຼີ ຈະລົງທຶນທາງຍຸດທະສາດໃນສະຫະລັດ ເພື່ອແລກປ່ຽນກັບການຫຼຸດຜ່ອນພາສີນຳເຂົ້າຂອງສະຫະລັດ.

# ຍີ່ປຸ່ນ ປັບປຸງກົດໝາຍຄົນເຂົ້າເມືອງ ໃຊ້ລະບົບຄັດກອງລ່ວງໜ້າ




(Japantimes) - ວັນທີ 10 ມີນານີ້, ລັດຖະບານຍີ່ປຸ່ນອະນຸມັດຮ່າງກົດໝາຍຄວບຄຸມການເຂົ້າເມືອງສະບັບປັບປຸງ ເພື່ອສ້າງລະບົບຄັດກອງກ່ອນເຂົ້າປະເທດທາງອອນລາຍ ສຳລັບຜູ້ເດີນທາງຈາກຕ່າງປະເທດ ແລະ ເພີ່ມຄ່າທຳນຽມການຍື່ນຂໍສະຖານະຜູ້ຢູ່ອາໄສສຳລັບຊາວຕ່າງຊາດ.

ຮ່າງກົດໝາຍທີ່ໄດ້ຮັບການອະນຸມັດຈາກຄະນະລັດຖະມົນຕີຈະຖືກນຳສະເໜີຕໍ່ລັດຖະສະພາ ແລະ ຫາກຜ່ານການອະນຸມັດ, ລັດຖະບານຕັ້ງເປົ້າທີ່ຈະນຳລະບົບຄັດກອງຄຸນສົມບັດການເຂົ້າປະເທດທີ່ເອີ້ນວ່າ "ລະບົບອະນຸຍາດການເດີນທາງທາງເອເລັກໂຕຣນິກຍີ່ປຸ່ນ" ຫຼື ເຈສຕາ (Japan Electronic System for Travel Authorization - JESTA) ມາໃຊ້ໃນປີງົບປະມານ 2028; ການນຳລະບົບ JESTA ມາໃຊ້ ມີຈຸດປະສົງເພື່ອປ້ອງກັນການກໍ່ການຮ້າຍ ແລະ ການຈ້າງງານທີ່ຜິດກົດໝາຍ ຕາມທີ່ສຳນັກງານກວດຄົນເຂົ້າເມືອງລະບຸ, ໂດຍຈະກວມເອົາ 74 ປະເທດ ແລະ ພາກພື້ນ ທີ່ພົນລະເມືອງຂອງພວກເຂົາໄດ້ຮັບການຍົກເວັ້ນການຂໍວີຊາໄລຍະສັ້ນໃນປັດຈຸບັນ.

ກ່ອນອອກເດີນທາງ, ຜູ້ສະໝັກຈະຕ້ອງໃຫ້ຂໍ້ມູນທາງອອນລາຍລ່ວງໜ້າ ລວມທັງຊື່, ຈຸດປະສົງຂອງການພັກເຊົາແລະສະຖານທີ່ທີ່ຕັ້ງໃຈຈະໄປຢ້ຽມຊົມ; ຂະນະທີ່ຜູ້ທີ່ຖືກສົງໄສວ່າເດີນທາງໄປເຮັດວຽກຜິດກົດໝາຍ ຫຼື ກະທຳຜິດອື່ນໆ ຈະຖືກປະຕິເສດບໍ່ໃຫ້ຂຶ້ນເຮືອບິນ ແລະ ເຮືອ.

ປັດຈຸບັນ, ຄ່າທຳນຽມການຍື່ນຂໍຢູ່ອາໄສຖາວອນ ຢູ່ທີ່ 10,000 ເຢນ ແລະ ການຕໍ່ອາຍຸວີຊາ ຢູ່ທີ່ 6,000 ເຢນ; ການປັບປຸງໄດ້ກຳນົດເພດານຄ່າທຳນຽມໄວ້ທີ່ 300,000 ເຢນ ສຳລັບການຍື່ນຂໍຢູ່ອາໄສຖາວອນ ແລະ 100,000 ເຢນ ສຳລັບການຕໍ່ອາຍຸວີຊາ ແລະ ຂັ້ນຕອນທີ່ຄ້າຍຄືກັນ.

ແຫຼ່ງຂ່າວລະບຸວ່າ ຄ່າທຳນຽມການຍື່ນຂໍຢູ່ອາໄສຖາວອນ ຄາດວ່າຈະຢູ່ທີ່ປະມານ 200,000 ເຢນ, ຂະນະທີ່ຄ່າທຳນຽມອື່ນໆ ຈະຢູ່ລະຫວ່າງ 10,000-70,000 ເຢນ ຂຶ້ນກັບໄລຍະເວລາທີ່ຕ້ອງການພັກເຊົາ.

*(1 ເຢນ=ປະມານ 136 ກີບ)

# ສະພາຕໍ່າອັງກິດ ປະຕິເສດຮ່າງ ກົດໝາຍຫ້າມສື່ສັງຄົມສຳລັບເດັກ



(AFP) - ວັນທີ 9 ມີນານີ້, ສະມາຊິກສະພາຕໍ່າອັງກິດປະຕິເສດຂໍ້ສະເໜີການຫ້າມສື່ສັງຄົມສຳລັບຜູ້ທີ່ມີອາຍຸຕໍ່າກວ່າ 16 ປີເນື່ອງຈາກລັດຖະບານສະໜັບສະໜູນການປຶກສາຫາລືແຍກຕ່າງຫາກກ່ຽວກັບມາດຕະການປົກປ້ອງເຍົາວະຊົນທາງໂລກອອນລາຍ.

ການຫ້າມສື່ສັງຄົມແບບດຽວກັບໃນອົດສະຕຣາລີແມ່ນສ່ວນໜຶ່ງຂອງຮ່າງກົດໝາຍທີ່ໄດ້ຮັບການອະນຸມັດຈາກສະພາສູງອັງກິດເມື່ອເດືອນມັງກອນຜ່ານມາ; ຢ່າງໃດກໍຕາມ, ຂໍ້ສະເໜີດັ່ງກ່າວບໍ່ໄດ້ຮັບສຽງສະໜັບສະໜູນພຽງພໍໃນສະພາຕໍ່າ ຫຼັງຈາກລັດຖະບານຄັດຄ້ານ ແລະ ສະເໜີໃຫ້ມີການເປີດຮັບຟັງຄວາມຄິດເຫັນສາທາລະນະໃນໄລຍະລະ ດູຮ້ອນປີນີ້ແທນ.

ນາງ ໂອລິເວຍ ເບລີ (Olivia Bailey) ລັດຖະມົນຕີກະຊວງສຶກສາທິການອັງກິດ ຮຽກຮ້ອງໃຫ້ມີມາດຕະການທີ່ຍືດຫຍຸ່ນກວ່າ, ໂດຍຊີ້ໃຫ້ເຫັນວ່າ ການຫ້າມທີ່ຮອບດ້ານ ອາດຈະຊຸກຍູ້ໃຫ້ເດັກເຂົ້າໄປສູ່ພື້ນທີ່ອິນເຕີເນັດທີ່ມີການຄວບຄຸມໜ້ອຍກວ່າ ພ້ອມກັບເຕືອນວ່າ ມັນອາດເຮັດໃຫ້ເຍົາວະຊົນບໍ່ກຽມພ້ອມເມື່ອພວກເຂົາເລີ່ມເຂົ້າສູ່ໂລກອອນລາຍ.

ຂະນະທີ່ ເຄຍ ສະຕາເມີ (Keir Starmer) ນາຍົກລັດຖະມົນຕີອັງກິດ ຍັງບໍ່ຕັດຄວາມເປັນໄປໄດ້ຂອງການຫ້າມເຍົາວະຊົນໃຊ້ສື່ສັງຄົມ ແລະ ກ່າວວ່າ ການເປີດຮັບຟັງຄວາມຄິດເຫັນສາທາລະນະ ຈະພິຈາລະນາມາດຕະການຕ່າງໆ, ລວມທັງການຈຳກັດອາຍຸ ແລະ ການຫ້າມລັກສະນະພິເສດທີ່ເຮັດໃຫ້ເສບຕິດ ເຊັ່ນການເລື່ອນເບິ່ງໜ້າຈໍ.

ອີກດ້ານໜຶ່ງ, ຊາວອັງກິດຫຼາຍຄົນ ລວມທັງນັກສະແດງທີ່ມີຊື່ສຽງ ຮຽກຮ້ອງໃຫ້ລັດຖະບານສະໜັບສະໜູນຂໍ້ສະເໜີດັ່ງກ່າວ ໂດຍໃຫ້ເຫດຜົນວ່າ ພຽງຜູ້ປົກຄອງ ບໍ່ສາມາດຕ້ານທານກັບອັນຕະລາຍຈາກສື່ສັງຄົມໄດ້.

# RSP ໄດ້ 182 ທີ່ນັ່ງ ໃນການເລືອກຕັ້ງສະພາຕໍ່າເນປານ



(BBC) - ວັນທີ 12 ມີນານີ້, ຄະນະກຳມະການເລືອກຕັ້ງເນປານ ໄດ້ປະກາດຜົນຢ່າງເປັນທາງການຂອງການເລືອກຕັ້ງທົ່ວໄປທີ່ຈັດຂຶ້ນເມື່ອວັນທີ 5 ມີນາຜ່ານມາ ເຊິ່ງເປັນການເລືອກຕັ້ງສະມາຊິກສະພາຜູ້ແທນປະຊາຊົນ ຫຼື ສະພາຕໍ່າ ຊຸດໃໝ່ 275 ທີ່ນັ່ງ ເຊິ່ງ 165 ທີ່ນັ່ງ ຈະຖືກເລືອກຕັ້ງໂດຍກົງ (ແບບແບ່ງເຂດ), ສ່ວນອີກ 110 ທີ່ນັ່ງຈະຖືກເລືອກຕັ້ງຜ່ານລະບົບຕົວແທນແບບສັດສ່ວນ (ລະບົບບັນຊີລາຍຊື່).

ພັກ ຣັສຕຣິຢາ ສະວາຕັນຕຣາ (Rastriya Swatantra Party - RSP) ຫຼື ພັກເອກະລາດແຫ່ງຊາດ (National Independent Party) ເຊິ່ງເປັນພັກການເມືອງສາຍກາງ ທີ່ມີບາເລນດຣາ ຊາ (Balendra Shah) ອາຍຸ 35 ປີ, ອະດີດນັກຮ້ອງເພງແຮັບທີ່ມີຊື່ສຽງຂອງປະເທດ ເປັນຜູ້ສະໝັກຮັບເລືອກຕັ້ງເປັນນາຍົກລັດຖະມົນຕີ ໄດ້ຮັບເລືອກຕັ້ງຫຼາຍທີ່ສຸດ 125 ທີ່ນັ່ງ ແບບແບ່ງເຂດ ແລະ 57 ທີ່ນັ່ງ ຈາກລະບົບບັນຊີລາຍຊື່ ລວມເປັນ 182 ທີ່ນັ່ງ ເຮັດໃຫ້ພັກມີສຽງສ່ວນຫຼາຍ, ແຕ່ຍັງບໍ່ເດັດຂາດ ເນື່ອງຈາກຍັງອີກພຽງ 2 ທີ່ນັ່ງ ເພື່ອໃຫ້ເຖິງເກນສອງສ່ວນສາມ.

ຊາ ເກີດວັນທີ 27 ເມສາ 1990 ໃຊ້ຊື່ສຽງຈາກການເປັນນັກຮ້ອງ ແລະ ຖານແຟນເພງໃນສື່ສັງຄົມ ຈົນໄດ້ຮັບເລືອກຕັ້ງເປັນເຈົ້າຄອງເອກະລາດຄົນທຳອິດຂອງນະຄອນຫຼວງກາດມານດຸ (Kathmandu) ເມື່ອປີ 2022, ກ່ອນຂະຫຍາຍຖານອຳນາດສູ່ການເມືອງລະດັບຊາດ ແລະກຽມດຳລົງຕຳແໜ່ງນາຍົກລັດຖະມົນຕີຜູ້ໃໝ່ໃນທີ່ສຸດ.

ຂະນະທີ່ Nepali Congress ເຊິ່ງເປັນພັກສາຍກາງເຊັ່ນກັນແລະເປັນພັກການເມືອງທີ່ໃຫຍ່ ແລະ ເກົ່າແກ່ທີ່ສຸດໃນລັດຖະສະພາທີ່ຖືກຍຸບ ໄດ້ 38 ທີ່ນັ່ງ ລວມທັງສອງລະບົບ, ຫຼຸດລົງຢ່າງຫຼວງຫຼາຍເນື່ອງຈາກເປັນພັກທີ່ຊະນະໃນການເລືອກຕັ້ງຄັ້ງກ່ອນ; ຕາມດ້ວຍພັກລັດທິມາກ-ເລນິນເອກະພາບ (Unified Marxist-Leninist) ຫຼື ພັກກອມມູນິດເນປານ ຂອງ ເຄ.ພີ. ຊາມາ ໂອລີ (K.P. Sharma Oli) ອະດີດນາຍົກລັດຖະມົນຕີ ໄດ້ 25 ທີ່ນັ່ງ, ພັກລັດທິເໝົາ (Maoist) ໄດ້ 7 ທີ່ນັ່ງ.

ສຳລັບການເລືອກຕັ້ງທົ່ວໄປຂອງເນປານຄັ້ງນີ້ ເກີດຂຶ້ນ 6 ເດືອນ ຫຼັງຈາກການປະທ້ວງທີ່ຮຸນແຮງເມື່ອເດືອນກັນຍາ 2025 ເຊິ່ງມີຜູ້ເສຍຊີວິດຢ່າງໜ້ອຍ 77 ຄົນ ໂດຍມີສາເຫດຕົ້ນຕໍມາຈາກການສໍ້ລາດບັງຫຼວງ ແລະ ເສດຖະກິດທີ່ຕົກຕໍ່າ.

# ປະທານາທິບໍດີ Somalia ລົງນາມໃນລັດຖະທຳມະນູນສະບັບໃໝ່



(Xinhua) - ຕອນແລງວັນອາທິດທີ 9 ມີນານີ້, ຮັສຊັນ ເຊກ ໂມຮາມຸດ (Hassan Sheikh Mohamud) ປະທານາທິບໍດີ ແຫ່ງ ສາທາລະນະລັດສະຫະພັນ ໂຊມາລີ ໄດ້ລົງນາມໃນລັດຖະທຳມະນູນສະບັບໃໝ່ຂອງປະເທດ ເພື່ອຊ່ວຍສ້າງຂອບກົດໝາຍທີ່ເສີມສ້າງການປົກຄອງ ແລະ ຍົກລະດັບສະຖຽນລະພາບທາງການເມືອງ; ໂມຮາມຸດ ກ່າວວ່າ ເອກະສານສະບັບປັບປຸງນີ້, ເຊິ່ງສິ້ນສຸດການປົກຄອງຊົ່ວຄາວເປັນເວລາຫຼາຍປີ, ແມ່ນເສົາຄ້ຳທີ່ສຳ ຄັນທີ່ສຸດໃນການເສີມສ້າງຄວາມສາມັກຄີຂອງຊາດ ແລະ ສ້າງຕັ້ງລະບົບການປົກຄອງແບບຖາວອນ.

"ວັນນີ້ເປັນການສິ້ນສຸດຂະບວນການປັບປຸງລັດຖະທຳມະນູນຂອງໂຊມາລີ ເຊິ່ງເປັນລັດຖະທຳມະນູນຊົ່ວຄາວມາໄດ້ໄລຍະໜຶ່ງແລ້ວ ແລະ ຫາກໍໄດ້ຮັບການຮັບຮອງຈາກລັດຖະສະພາເມື່ອບໍ່ດົນມານີ້" ໂມຮາມຸດກ່າວ, ອີງຕາມຖະແຫຼງການທີ່ອອກໂດຍສຳນັກງານປະທານາທິບໍດີ.

ກົດໝາຍພື້ນຖານສະບັບໃໝ່ນີ້ ປ່ຽນແທນລັດຖະທຳມະນູນຊົ່ວຄາວປີ 2012 ເຊິ່ງໄດ້ສ້າງຕັ້ງຮູບແບບການປົກຄອງແບບສະຫະພັນໃນໄລຍະການຟື້ນຟູປະເທດຫຼັງສົງຄາມກາງເມືອງ, ແຕ່ໄດ້ປະບົດບັນຍັດສຳຄັນຫຼາຍມາດຕາໄວ້ໃຫ້ ມີການທົບທວນ ແລະ ສະຫຼຸບໃນພາຍຫຼັງ.

ຢ່າງໃດກໍຕາມ, ສອງລັດລະດັບພາກພື້ນຄື: ປຸນແລນ (Puntland) ແລະ ຈູບາແລນ (Jubaland) ພ້ອມກັບບັນດາຜູ້ນຳຝ່າຍຄ້ານ ໄດ້ປະຕິເສດເອກະສານສະບັບປັບປຸງ, ໂດຍອ້າງວ່າຂະບວນການດັ່ງກ່າວຂາດຄວາມເຫັນດີເປັນເອກະພາບ ແລະ ຄວາມຖືກຕ້ອງຕາມກົດໝາຍ; ລັດປຸນແລນ ແລະ ລັດຈູບາແລນກ່າວວ່າພວກເຂົາຈະສືບຕໍ່ຍອມຮັບລັດຖະທຳມະນູນຊົ່ວຄາວຕໍ່ໄປ.

# ລັດຖະສະພາ Lebanon ຕໍ່ອາຍຸການ ທ່າມກາງຄວາມເຄັ່ງຕຶງທີ່ເພີ່ມຂຶ້ນ



(Xinhua) - ວັນຈັນທີ 9 ມີນານີ້, ລັດຖະສະພາລີບັງ ຫຼື ສາທາລະນະລັດເລບານອນ ໄດ້ລົງມະຕິເພື່ອຕໍ່ອາຍຸການຂອງຕົນອີກສອງປີ, ໂດຍອ້າງເຖິງຄວາມເປັນໄປບໍ່ໄດ້ທີ່ຈະຈັດການເລືອກຕັ້ງລັດຖະສະພາທ່າມກາງຄວາມເຄັ່ງຕຶງທີ່ທະວີຄວາມຮຸນແຮງຢ່າງຕໍ່ເນື່ອງລະຫວ່າງ ຮິຊບອນລາ (Hezbollah) ແລະ ອິດສະຣາເອນ; ມີສະມາຊິກ 76 ຄົນ ລົງຄະແນນສຽງເຫັນດີ, 41 ຄົນຄັດຄ້ານ ແລະ 4 ຄົນ ງົດອອກສຽງ, ຕາມການລາຍງານສື່ມວນຊົນທ້ອງຖິ່ນ.

ລັດຖະສະພາລີບັງ ມີສະມາຊິກ 128 ຄົນທີ່ໄດ້ຮັບເລືອກຕັ້ງເປັນເວລາສີ່ປີ ໃນເຂດເລືອກຕັ້ງທີ່ມີສະມາຊິກຫຼາຍຄົນ, ການເລືອກຕັ້ງຄັ້ງຫຼ້າສຸດແມ່ນວັນທີ 15 ພຶດສະພາ 2022 ແລະ ມີກຳນົດການເລືອກຕັ້ງເດີມແມ່ນວັນທີ 10 ພຶດສະພາ 2026.



**ການນຳ...**

(ຕໍ່ຈາກໜ້າ 1)

ຊາຊົນປະຕິວັດລາວ ຄົບຮອບ 71 ປີ (22/3/1956-22/3/2026).

ການວາງພວງມາລາຄັ້ງນີ້, ເປັນການສະແດງເຖິງຄວາມເຄົາລົບຮັກ, ຄວາມກະຕັນຍູຮູ້ບຸນຄຸນເຖິງຄຸນງາມຄວາມດີ, ນ້ຳໃຈຕໍ່ສູ້ຢ່າງພິລະອາດຫານ ແລະ ບໍ່ຍອມຈຳນົນຂອງບັນພະບຸລຸດລາວກໍຄືບັນດານັກຮົບປະຕິວັດຂອງລາວ ທີ່ເສຍສະຫຼະຊີວິດ, ເລືອດເນື້ອ ເພື່ອພາລະກິດປະຕິວັດຢ່າງອົງອາດກ້າຫານ ພາຍໃຕ້ການຊີ້ນຳ-ນຳພາຂອງພັກປະຊາຊົນປະຕິວັດລາວ ຈົນສາມາດຍາດໄດ້ໄຊຊະນະ ແລະ ປະກາດເອກະລາດ, ສະຖາປະນາເປັນສາທາລະນະລັດ ປະຊາທິປະໄຕປະຊາຊົນລາວ ຂຶ້ນຢ່າງສະຫງ່າຜ່າເຜີຍໃນວັນທີ 2 ທັນວາ 1975.

ສຳລັບການວາງກະຕ່າດອກໄມ້ຕໍ່ໜ້າຮູບປັ້ນຫຼໍ່ຂອງປະທານ ໄກສອນ ພົມວິຫານ ກໍເພື່ອລະນຶກເຖິງຄຸນງາມຄວາມດີຂອງປະທານ ໄກສອນ ພົມວິຫານ ຜູ້ນຳທີ່ເຄົາລົບຮັກຂອງປວງຊົນລາວທັງຊາດ ດ້ວຍຄວາມກະຕັນຍູຮູ້ບຸນຄຸນ ແລະ ຈາລຶກຊື່ສຽງ, ຄຸນງາມຄວາມດີ, ຜົນງານອັນໃຫຍ່ຫຼວງຂອງເພິ່ນ ທີ່ອຸທິດຕະຫຼອດຊີວິດເພື່ອພາລະກິດຕໍ່ສູ້ຍາດເອົາເອກະລາດແຫ່ງຊາດ, ອິດສະລະພາບ ມາໃຫ້ປະຊາຊົນລາວບັນດາເຜົ່າ, ນຳພາປະຕິບັດ 2 ໜ້າທີ່ຍຸດທະສາດຄື: ປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດກໍຄືພາລະກິດປ່ຽນແປງໃໝ່ຮອບດ້ານມີຫຼັກການຂອງພັກຢ່າງມີໄຊ; ປະທານ ໄກສອນ ພົມວິຫານ ແມ່ນວິລະບູລຸດ, ເປັນລູກຜູ້ປະເສີດ ແລະ ຈົງຮັກພັກດີຂອງປະຊາຊົນລາວບັນດາເຜົ່າ, ເວລາໃດກໍຖືເອົາຜົນປະໂຫຍດຂອງຊາດ, ຂອງປະຊາຊົນ ສູງກວ່າສິ່ງໃດໝົດ, ເພິ່ນເປັນຜູ້ນຳທີ່ປີຊາສາມາດ, ສະຫຼາດສ່ອງໃສ, ມີວິໄສທັດອັນກວ້າງໄກ, ມີຄວາມສາມາດຄ່ອງແຄ້ວໃນການໝູນໃຊ້ຢ່າງປະດິດສ້າງທິດສະດີ ມາກ-ເລນິນ, ທິດສະດີປະຕິວັດ ແລະ ບັນດາບົດຮຽນອັນຍອດຍິ່ງຂອງມວນມະນຸດ ເຂົ້າໃນການນຳພາ-ຊີ້ນຳການປະຕິວັດລາວໃນແຕ່ລະໄລຍະ ສາມາດຍາດໄດ້ໄຊຊະນະສະຫງ່າງາມຕະຫຼອດມາ.

**(ຂ່າວ: ທະນູທອງ, ພາບ: ຂັນໄຊ)**





